ກົດໝາຍ ວ່າດ້ວຍກຳມະສິດ ........................................................................................................5
ໝວດທີ 1 ວ່າດ້ວຍບົດບັນຍັດທົ່ວໄປ....................................................................................................5
ມາດຕາ 1. ກຳມະສິດ ........................................................................................................................5
ມາດຕາ 2. ຮູບກຳມະສິດ.....................................................................................................................5
ໝວດທີ 2 ວ່າດ້ວຍກຳມະສິດຂອງລັດ ....................................................................................................5
ມາດຕາ 3. ເຈົ້າກຳມະສິດຂອງຊັບສິ່ງຂອງ ຂອງລັດ ...................................................................................5
ມາດຕາ 4. ເປົ້າໝາຍກຳມະສິດຂອງລັດ..................................................................................................6
ມາດຕາ 5. ການໄດ້ມາເປັນກຳມະສິດຂອງລັດ...........................................................................................6
ມາດຕາ 6. ລະບຽບການຊີ້ຂາດກ່ຽວກັບຊັບສິ່ງຂອງຄົງທີ່ຂອງລັດ ......................................................................7
ມາດຕາ 7. ລະບຽບການຊີ້ຂາດກ່ຽວກັບຊັບໝູນວຽນ ແລະ ຜະລິດຕະພັນ ..........................................................7
ມາດຕາ 8. ລະບຽບກ່ຽວກັບການຣິບຊັບສິ່ງຂອງ ຂອງລັດ ..............................................................................7
ໝວດທີ 3 ວ່າດ້ວຍກຳມະສິດລວມໝູ່ .....................................................................................................7
ມາດຕາ 9. ເປົ້າໝາຍກຳມະສິດຂອງສະຫະກອນ ແລະ ອົງການຈັດຕັ້ງລວມໝູ່ອື່ນໆ..................................................7
ມາດຕາ 10. ເນື້ອໃນຂອງກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ.............................................8
ມາດຕາ 11. ການໄດ້ມາເປັນກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ ..........................................8
ມາດຕາ 12. ການນຳໃຊ້ທີ່ດິນທີ່ຂຶ້ນກັບສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ .......................................8
ມາດຕາ 13. ລະບຽບກ່ຽວກັບການຣິບຊັບສິ່ງຂອງສະຫະກອນ ແລະ ອົງການຈັດຕັ້ງລວມໝູ່ອື່ນໆ ......8
ໝວດທີ 4 ວ່າດ້ວຍກຳມະສິດເອກະເທດ, ກຳມະສິດເອກະຊົນ ແລະ ກຳມະສິດສ່ວນຕົວ........................................8
ມາດຕາ 14. ເປົ້າໝາຍກຳມະສິດເອກະເທດ.............................................................................................8
ມາດຕາ 15. ສິດ ແລະ ພັນທະຂອງເຈົ້າກຳມະສິດເອກະເທດ .........................................................................9
ມາດຕາ 16. ເປົ້າໝາຍກຳມະສິດເອກະຊົນ ..............................................................................................9
ມາດຕາ 17. ສິດ ແລະພັນທະຂອງຫົວໜ່ວຍເສດຖະກິດເອກະຊົນ ....................................................................9
ມາດຕາ 18. ການຮັບຮູ້ສິດເປັນເຈົ້າຂອງຫົວໜ່ວຍເສດຖະກິດເອກະຊົນ ...........................................................9
ມາດຕາ 19. ມາດຕະການຕໍ່ຫົວໜ່ວຍເສດຖະກິດເອກະຊົນ ..........................................................................9
ມາດຕາ 20. ເປົ້າໝາຍກຳມະສິດສ່ວນຕົວ ..............................................................................................10
ມາດຕາ 21. ເນື້ອໃນຂອງກຳມະສິດສ່ວນຕົວ...........................................................................................10
ມາດຕາ 22. ການຈັບຈອງທີ່ດິນໄວ້ລ້າໆ...............................................................................................10
ມາດຕາ 23. ການຣິບ ແລະ ການຢຶດຊັບສິ່ງຂອງ ຂອງເອກະເທດ, ເອກະຊົນ ແລະ ຂອງສ່ວນຕົວ .....10
ມາດຕາ 24. ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ
........................................................................................................................................10
ມາດຕາ 25. ກຳມະສິດລວມ ...............................................................................................................11
ມາດຕາ 26. ສິນສົມສ້າງ ....................................................................................................................11
ມາດຕາ 27. ການແບ່ງປັນສິນສົມສ້າງ ...................................................................................................11

ໝວດທີ 5  ວ່າດ້ວຍການໄດ້ ແລະ ການສິ້ນສຸດກຳມະສິດ......................................................12
ມາດຕາ 28. ການໄດ້ມາເປັນກຳມະສິດ ......................................................................12
ມາດຕາ 29. ການມອບຊັບສິ່ງຂອງ ..........................................................................12
ມາດຕາ 30. ການຄອບຄອງທີ່ຖືກກົດໝາຍ ..................................................................12
ມາດຕາ 31. ການຄອບຄອງວັດຖຸສິ່ງຂອງຕາມການອະນຸຍາດພິເສດ .......................................12
ມາດຕາ 32. ລະບຽບການກ່ຽວກັບການມອບວັດຖຸບູຮານ ແລະ ສິ່ງທີ່ກໍ່ສ້າງສິນລະປະວັນນະກຳ ໃຫ້ບຸກຄົນອື່ນ ...............................................................................................12
ມາດຕາ 33. ການສູນຫາຍ ຫລື ການເປ່ເພຂອງຊັບສິ່ງຂອງ ໂດຍເຫດບັງເອີນ ຫລື ເຫດສຸດວິໄສ ໃນເວລາມອບ ..........................................................................................13
ມາດຕາ 34. ກຳມະສິດກ່ຽວກັບໝາກຜົນ ແລະ ລາຍໄດ້..................................................13
ມາດຕາ 35. ກຳມະສິດກ່ຽວກັບມູນມໍຣະດົກ..............................................................13
ມາດຕາ 36. ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ .....................................................................13
ມາດຕາ 37. ວິທີປະຕິບັດກ່ຽວກັບຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ............................................13
ມາດຕາ 38. ການເກັບຊັບສິ່ງຂອງທີ່ຕົກເຮັ່ຽ ..............................................................14
ມາດຕາ 39. ການທົດແທນຄ່າໃຊ້ຈ່າຍໃຫ້ຜູ້ທີ່ເກັບຊັບສິ່ງຂອງຕົກເຮັ່ຽ.................................14
ມາດຕາ 40. ສັດຊື່ງຂາດການຮັກສາ .......................................................................14
ມາດຕາ 41. ການພົບພໍ້ວັດຖຸທີ່ມີຄ່າ ຫລື ວັດຖຸບູຮານ.......................................................15
ມາດຕາ 42. ການໄດ້ມາເປັນກຳມະສິດ ເນື່ອງຈາກການຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນ ໂດຍ ຄວາມບໍລິສຸດໃຈ. ...................................................................................15
ມາດຕາ 43. ການເໝົາຊື້ຊັບສິ່ງຂອງດ້ວຍຄວາມຈຳເປັນ ..................................................16
ມາດຕາ 44. ການຮິບຊັບສິ່ງຂອງ...........................................................................16
ມາດຕາ 45. ການສິ້ນສຸດກຳມະສິດ. .......................................................................16
ໝວດທີ 6 ວ່າດ້ວຍຂອບເຂດຂອງການນຳໃຊ້ກຳມະສິດ...................................................17
ມາດຕາ 46. ການນຳໃຊ້ກຳມະສິດ...........................................................................17
ມາດຕາ 47. ຂອບເຂດການປຸກສ້າງເຮືອນ ຫລື ການປູກຕົ້ນໄມ້ ..........................................17
ມາດຕາ 48. ສິດຂອງຜູ້ຖືກເສັຽຫາຍຍ້ອນການນຳໃຊ້ກຳມະສິດໂດຍບໍ່ຖືກຕ້ອງ............................17
ມາດຕາ 49. ການອະນຸຍາດໃຫ້ມີທາງຜ່ານ.................................................................17
ມາດຕາ 50. ການອະນຸຍາດໃຫ້ນ້ຳຮ່ອງໄຫລຜ່ານ. .........................................................18
ມາດຕາ 51. ສິດຂອງຜູ້ຮັກສາເຄື່ອງປູກຂອງຝັງ ..........................................................18
ມາດຕາ 52. ພັນທະຂອງຜູ້ຮັກສາດິນບ້ານ ຫລື ດິນສວນ..................................................18
ມາດຕາ 53. ສິດຂອງເຈົ້າຂອງບ້ານ ຫລື ເຈົ້າຂອງສວນ....................................................18
ມາດຕາ54.  ຄວາມຮັບຜິດຊອບຂອງເຈົ້າຂອງບ້ານ ຫລື ເຈົ້າຂອງສວນ ....................................18
ມາດຕາ 55. ການຮັບຮູ້ສິດນຳໃຊ້ທີ່ດິນເປົ່າຫວ່າງ ແລະ ທີ່ດິນປ່າໄມ້ທີ່ຊຸດໂຊມ .............................19
ໝວດທີ 7 ວ່າດ້ວຍການປົກປ້ອງກຳມະສິດ ................................................................19

ມາດຕາ 56. ການປົກປ້ອງກຳມະສິດ ........................................................................19
ມາດຕາ 57. ການຮ້ອງຟ້ອງເພື່ອທວງເອົາຊັບສິ່ງຂອງຄືນ ..............................................19
ມາດຕາ 58. ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍ ໂດຍຄວາມບໍລິສຸດໃຈ ............................19
ມາດຕາ 59. ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍໂດຍບໍ່ມີຄວາມບໍລິສຸດໃຈ ........................19
ມາດຕາ 60. ໝາກຜົນ ແລະ ລາຍໄດ້ຈາກຊັບສິ່ງຂອງທີ່ຄອບຄອງຢ່າງຜິດກົດໝາຍ.....................20
ມາດຕາ 61. ການທີ່ເຮັດໃຫ້ສະພາບຂອງຊັບສິ່ງຂອງ ທີ່ຄອບຄອງຢ່າງຜິດກົດໝາຍດີຂຶ້ນ. .............20
ມາດຕາ 62. ການຮ້ອງຟ້ອງເພື່ອໃຫ້ຮັບຮູ້ສິດກ່ຽວກັບກຳມະສິດ. ..............................................20
ມາດຕາ 63. ການຮ້ອງຟ້ອງເພື່ອທວງໃຫ້ຢຸດເຊົາການກີດຂວາງ ຫລື ອຸບປະສັກ............................20
ມາດຕາ 64. ການຮ້ອງຟ້ອງເພື່ອຂໍເອົາການໃຊ້ແທນຄ່າເສັຽຫາຍ...............................................21
ມາດຕາ 65. ການຮ້ອງຟ້ອງເພື່ອຂໍເອົາການໃຊ້ແທນຄ່າເສັຽຫາຍ ເນື່ອງຈາກການນຳໃຊ້ນ້ຳຫ້ວຍ, ນ້ຳໜອງຄອງບຶງ ຫລື ເໝືອງຝາຍ.........................................................................................21
ມາດຕາ 66. ການຮ້ອງຟ້ອງເອົາຊັບສິ່ງຂອງທີ່ໄດ້ມອບໃຫ້ບຸກຄົນອື່ນຄອບຄອງ ............................21
ມາດຕາ 67. ການທີ່ໄດ້ຊັບສິ່ງຂອງມາໂດຍບໍ່ມີພື້ນຖານຖືກຕ້ອງ ...............................................21
ມາດຕາ 68. ການປົກປ້ອງສິດຂອງຜູ້ຄອບຄອງຊັບສິ່ງຂອງ ຊຶ່ງຕົນບໍ່ແມ່ນເຈົ້າກຳມະສິດ ................21

# ກົດໝາຍ
## ວ່າດ້ວຍກຳມະສິດ

ເລກທີ 01/90/ສປສ ລົງວັນທີ 27/6/90 (ໄດ້ລົງຄະແນນສຽງຮັບຮອງເອົາຢ່າງເປັນເອກະສັນ ໃນກອງປະຊຸມສະໄໝວິສາມັນຄົບຄະນະ ເທື່ອທີສີ່ຂອງສະພາປະຊາຊົນສູງສຸດ (ຊຸດທີ 2) ໃນວັນທີ 27ມິຖຸນາ1990 ເວລາ 14 ໂມງ 30 ນາທີ ແລະ ປະກາດໃຊ້ຕາມດຳລັດຂອງ ປະທານປະເທດ ສ ປ ປ ລ ເລກທີ 40/ປທປທ ລົງວັນທີ 27 ກໍລະກົດ 1990 )

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ສະພາປະຊາຊົນສູງສຸດ ເລກທີ 01/90/ສປສ

# ກົດໝາຍ ວ່າດ້ວຍກຳມະສິດ

## ໝວດທີ 1 ວ່າດ້ວຍບົດບັນຍັດທົ່ວໄປ

### ມາດຕາ 1. ກຳມະສິດ

ກຳມະສິດ ແມ່ນ ສິດອັນຄົບຖ້ວນ ແລະ ເດັດຂາດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນ ແລະ ສ່ວນ ຕົວໃນການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊີ້ຂາດກ່ຽວກັບຊັບສິ່ງຂອງອັນໃດອັນໜຶ່ງ ໃນຂອບເຂດທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 2. ຮູບກຳມະສິດ

ກຳມະສິດມີ 5 ຮູບ ຄື :

- ກຳມະສິດຂອງລັດ;
- ກຳມະສິດລວມໝູ່;
- ກຳມະສິດເອກະເທດ;
- ກຳມະສິດເອກະຊົນ;
- ກຳມະສິດສ່ວນຕົວ.

ກຳມະສິດລວມໝູ່ ແບ່ງອອກເປັນກຳມະສິດຂອງສະຫະກອນ ແລະ ຂອງອົງການຈັດຕັ້ງລວມໝູ່ອື່ນໆ.

ລັດປົກປ້ອງກຳມະສິດດັ່ງກ່າວດ້ວຍກົດໝາຍ.

## ໝວດທີ 2 ວ່າດ້ວຍກຳມະສິດຂອງລັດ

### ມາດຕາ 3. ເຈົ້າກຳມະສິດຂອງຊັບສິ່ງຂອງ ຂອງລັດ

ລັດເປັນເຈົ້າກຳມະສິດແຕ່ຜູ້ດຽວ ກ່ຽວກັບຊັບສິ່ງຂອງທັງໝົດຂອງລັດ ແຕ່ຊັບສິ່ງຂອງດັ່ງກ່າວ ແມ່ນຢູ່ໃນການຄຸ້ມຄອງຂອງອົງການຈັດຕັ້ງຂອງລັດ.

ອົງການຈັດຕັ້ງຂອງລັດ ເປັນຜູ້ປະຕິບັດສິດຄອບຄອງ, ນຳໃຊ້, ໄດ້ຮັບຫມາກຜົນ ແລະ ຊີ້ຂາດ, ອາດຈະມອບໃຫ້ອົງການຈັດຕັ້ງລວມຫມູ່ ຫລື ບຸກຄົນເຊົ່າຊັບສິ່ງຂອງນັ້ນ ຕາມຂອບເຂດ ທີ່ກົດຫມາຍໄດ້ກຳນົດໄວ້ ແລະ ສອດຄ່ອງກັບວຽກງານ ແລະ ແຜນການຂອງລັດກໍໄດ້.

## ມາດຕາ 4. ເປົ້າຫມາຍກຳມະສິດຂອງລັດ

ກຳມະສິດຂອງລັດ ມີ 2 ປະເພດຄື :

ບັນດາພື້ນຖານວັດຖຸເຕັກນິກຂອງສັງຄົມ ທີ່ຂຶ້ນກັບການຄຸ້ມຄອງຂອງລັດ ເຊັ່ນ: ໂຮງຈັກ ໂຮງງານ, ພາຫະນະຂົນສົ່ງທາງບົກ, ທາງນ້ຳ ແລະ ທາງອາກາດ, ພາຫະນະສື່ສານ, ໄປສະນີ, ທະນາຄານ, ວິສາຫະກິດ ແລະ ອື່ນໆທີ່ເປັນຂອງລັດ;

ບັນດາຊັບສິ່ງຂອງທີ່ໃຊ້ໃນການເຄື່ອນໄຫວຂອງກົງຈັກລັດ ເຊັ່ນ: ອາຄານ, ລົດ, ໂຕະ, ຕັ່ງ ແລະ ອື່ນໆ.

ສ່ວນທີ່ດິນ ພື້ນດິນ, ນ້ຳ, ປ່າໄມ້, ສັດນ້ຳ ແລະ ສັດປ່າທີ່ເປັນຊັບພະຍາກອນທຳມະຊາດ ແລະ ເປັນກຳມະສິດຂອງວົງຄະນາຍາດແຫ່ງຊາດ ຊຶ່ງແມ່ນລັດເປັນຕົວແທນນັ້ນ ລັດອາດຈະມອບສິດຄອບຄອງ, ນຳໃຊ້, ໂອນ ແລະ ສິດສືບທອດໃຫ້ອົງການຈັດຕັ້ງອື່ນໆ, ຫົວຫນ່ວຍເສດຖະກິດ ຫລື ບຸກຄົນກໍໄດ້.

ອົງການຈັດຕັ້ງອື່ນ, ຫົວຫນ່ວຍເສດຖະກິດ ຫລື ບຸກຄົນນັ້ນອາດຈະທຳການໂອນ ຫລື ສືບທອດທີ່ດິນກໍໄດ້ ແຕ່ບໍ່ໃຫ້ນຳອອກຊື້ຂາຍ.

## ມາດຕາ 5. ການໄດ້ມາເປັນກຳມະສິດຂອງລັດ

ກຳມະສິດຂອງລັດ ແມ່ນ ໄດ້ມາຈາກ:

ການຫັນປ່ຽນກຳມະສິດມາເປັນຂອງລັດ;

ການກໍ່ສ້າງຂອງອົງການຈັດຕັ້ງ ແລະ ວິສາຫະກິດຂອງລັດ;

ການເກັບພາສີອາກອນຂອງລັດ;

ການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈຳເປັນ;

ການຮິບຊັບສິ່ງຂອງ;

ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ;

ການເກັບຂອງຕົກເຮ່ຍ;

ການພົບເຫັນວັດຖຸທີ່ມີຄ່າ;

ການໄດ້ສັດທີ່ຂາດການຮັກສາ;

ການຊື້ ແລະ ການແລກປ່ຽນ;

ການມອບຊັບສິ່ງຂອງໃຫ້ລັດ;

ການສືບທອດມູນມໍຣະດົກ.

### ມາດຕາ 6. ລະບຽບການຊີ້ຂາດກ່ຽວກັບຊັບສິ່ງຂອງຄົງທີ່ຂອງລັດ

ລະບຽບການມອບວິສາຫະກິດ, ອາຄານ, ສິ່ງທີ່ກໍ່ສ້າງ, ວັດຖຸປະກອນ ແລະ ຊັບສິ່ງຂອງອື່ນໆ ຂອງລັດ ຊຶ່ງເປັນຊັບສິ່ງຂອງຄົງທີ່ ຂອງອົງການຈັດຕັ້ງໜຶ່ງຂອງລັດ ໃຫ້ອົງການຈັດຕັ້ງອື່ນຂອງລັດນັ້ນ ໄດ້ກຳນົດໄວ້ໃນລະບຽບກົດໝາຍສະເພາະ.

ຊັບສິ່ງຂອງທີ່ກ່າວມາຂ້າງເທິງນີ້ ບໍ່ອາດຈະມອບໃຫ້ບຸກຄົນໃດບຸກຄົນໜຶ່ງເປັນເຈົ້າກຳມະສິດໄດ້ ເວັ້ນເສັຽແຕ່ ຊັບສິ່ງຂອງບາງຢ່າງ ທີ່ຂາຍໃຫ້ຕາມລະບຽບການທີ່ໄດ້ບົ່ງໄວ້ເທົ່ານັ້ນ.

### ມາດຕາ 7. ລະບຽບການຊີ້ຂາດກ່ຽວກັບຊັບໝູນວຽນ ແລະ ຜະລິດຕະພັນ

ອົງການຈັດຕັ້ງຂອງລັດເປັນຜູ້ຊີ້ຂາດກ່ຽວກັບວັດຖຸດິບ, ວັດຖຸປະກອນ, ເງິນ ແລະຊັບໝູນວຽນອື່ນໆ ແລະ ຜະລິດຕະພັນປຸງແຕ່ງ ຢ່າງສອດຄ່ອງກັບຄຸນປະໂຫຍດຂອງມັນ ແລະ ຕາມແຜນການທີ່ໄດ້ວາງອອກ.

ບໍ່ມີບຸກຄົນໃດຈະມີສິດນຳໃຊ້ຊັບສິ່ງຂອງທີ່ເປັນກຳມະສິດຂອງລັດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ.

### ມາດຕາ 8. ລະບຽບກ່ຽວກັບການຮິບຊັບສິ່ງຂອງ ຂອງລັດ

ວິສາຫະກິດ, ອາຄານ, ສິ່ງທີ່ກໍ່ສ້າງ, ວັດຖຸປະກອນ ແລະ ຊັບສິ່ງຂອງອື່ນໆທີ່ເປັນຊັບຄົງທີ່ ຂອງອົງການຈັດຕັ້ງຂອງລັດ ບໍ່ອາດຈະເອົາມາເປັນເປົ້າໝາຍຂອງການຄ້ຳປະກັນ ແລະ ບໍ່ອາດຈະຖືກຮິບ ຫລື ຍຶດຕາມການຮ້ອງຟ້ອງຂອງເຈົ້າໜີ້ໄດ້ ເວັ້ນເສັຽແຕ່ພາຫະນະທາງດ້ານການເງິນ ແລະ ຊັບສິ່ງຂອງອື່ນໆທີ່ໄດ້ກຳນົດໄວ້ໃນກົດໝາຍເທົ່ານັ້ນ.

ສຳລັບຊັບສິ່ງຂອງ ຂອງລັດທີ່ຢູ່ຕ່າງປະເທດ ກໍໃຫ້ປະຕິບັດເຊັ່ນດຽວກັນກັບຊັບສິ່ງຂອງ ຂອງລັດທີ່ຢູ່ພາຍໃນປະເທດ.

ການທວງເອົາຊັບສິ່ງຂອງຂອງລັດຈາກຜູ້ທີ່ຄອບຄອງຢ່າງຜິດກົດໝາຍຢູ່ນັ້ນ ຈະດຳເນີນເວລາໃດກໍໄດ້ ໂດຍບໍ່ມີອາຍຸຄວາມໃນການຮ້ອງຟ້ອງທາງແພ່ງ.

## ໝວດທີ 3 ວ່າດ້ວຍກຳມະສິດລວມໝູ່

### ມາດຕາ 9. ເປົ້າໝາຍກຳມະສິດຂອງສະຫະກອນ ແລະ ອົງການຈັດຕັ້ງລວມໝູ່ອື່ນໆ

ກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆມີພາຫະນະການຜະລິດ ແລະ ຊັບສິ່ງຂອງອື່ນໆທີ່ຈຳເປັນສຳລັບການປະຕິບັດໜ້າທີ່ວຽກງານຂອງຕົນ ເຊັ່ນ ເຄື່ອງຈັກ, ພາຫະນະຂົນສົ່ງ, ລົດດຸດ, ລົດໄຖ, ສັດ, ອາຄານ, ສິ່ງທີ່ກໍ່ສ້າງ, ວິສາຫະກິດ, ເຮືອນພັກຜ່ອນ, ທຶນຄົງທີ່, ທຶນໝູນວຽນ ແລະ ອື່ນໆ.

**ມາດຕາ 10. ເນື້ອໃນຂອງກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ**

ສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆມີສິດຄອບຄອງ, ນຳໃຊ້, ໄດ້ຮັບຫມາກຜົນ ແລະ ຊີ້ຂາດກ່ຽວກັບຊັບສິ່ງຂອງຊຶ່ງເປັນກຳມະສິດຂອງຕົນ ໃນຂອບເຂດທີ່ກົດຫມາຍໄດ້ກຳນົດໄວ້ ແລະ ປະຕິບັດສິດດັ່ງກ່າວໃຫ້ສອດຄ່ອງກັບກົດລະບຽບຂອງຕົນ.

ສິດຊີ້ຂາດກ່ຽວກັບຊັບສິ່ງຂອງນັ້ນ ແມ່ນມອບໃຫ້ສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ ເປັນຜູ້ປະຕິບັດຢ່າງເປັນເອກະລາດ ແລະ ບໍ່ມີບຸກຄົນໃດຈະສາມາດຊີ້ຂາດກ່ຽວກັບຊັບສິ່ງຂອງດັ່ງກ່າວໄດ້.

**ມາດຕາ 11. ການໄດ້ມາເປັນກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ**

ກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆແມ່ນໄດ້ມາຈາກ:

ການປະກອບສ່ວນທາງດ້ານຊັບສິ່ງຂອງ ຂອງສະມາຊິກແຕ່ລະຄົນ;

ການຜະລິດ ແລະ ການບໍລິການ;

ການຊື້ ແລະ ການແລກປ່ຽນ;

ການຊ່ວຍເຫລືອທາງດ້ານວັດຖຸ ແລະ ການເງິນຂອງລັດ, ອົງການຈັດຕັ້ງອື່ນໆ ແລະ ບຸກຄົນ ແລະ ອື່ນໆ.

**ມາດຕາ 12. ການນຳໃຊ້ທີ່ດິນທີ່ຂື້ນກັບສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ**

ສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ ຕ້ອງນຳໃຊ້ທີ່ດິນຊຶ່ງຕົນໄດ້ຄອບຄອງນັ້ນຢ່າງຖືກຕ້ອງ, ຖ້າຫາກບໍ່ນຳໃຊ້ໃຫ້ເປັນຜົນປະໂຫຍດແລ້ວ ສະຫະກອນ ຫລືອົງການຈັດຕັ້ງລວມຫມູ່ກໍຈະໄດ້ຖືກປັບໃຫມຕາມລະບຽບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຫລືລັດອາດຈະຖອດເອົາທີ່ດິນຄືນ ແລະ ມອບໃຫ້ຫົວຫນ່ວຍເສດຖະກິດອື່ນ ຫລື ບຸກຄົນອື່ນນຳໃຊ້ກໍໄດ້ ແຕ່ລັດຈະບໍ່ໄດ້ໃຊ້ແທນຄ່າໃດໆໃຫ້ທັງສິ້ນ.

**ມາດຕາ 13. ລະບຽບກ່ຽວກັບການຮິບຊັບສິ່ງຂອງສະຫະກອນ ແລະ ອົງການຈັດຕັ້ງລວມຫມູ່ອື່ນໆ**

ອາຄານ, ການກໍ່ສ້າງ, ລົດດູດ, ລົດໄຖ, ພາຫະນະຂົນສົ່ງ ແລະ ຊັບສິ່ງຂອງອື່ນໆທີ່ເປັນຊັບຄົງທີ່ ຂອງສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ ບໍ່ອາດຈະຖືກຮິບໄດ້ເວັ້ນເສັຽແຕ່ພາຫະນະທາງດ້ານການເງິນ ແລະ ຊັບສິ່ງຂອງອື່ນໆທີ່ໄດ້ກຳນົດໄວ້ໃນກົດຫມາຍເທົ່ານັ້ນ.

## ຫມວດທີ 4 ວ່າດ້ວຍກຳມະສິດເອກະເທດ, ກຳມະສິດເອກະຊົນ ແລະ ກຳມະສິດສ່ວນຕົວ

**ມາດຕາ 14. ເປົ້າຫມາຍກຳມະສິດເອກະເທດ**

ກຳມະສິດເອກະເທດມີ ພາຫະນະການຜະລິດ, ຜະລິດຕະພັນ ແລະ ສິນຄ້າ ຊຶ່ງເປັນກຳມະສິດສ່ວນບຸກຄົນຂອງເຈົ້າຊັບນ້ອຍ : ຊາວກະສິກອນ, ນາຍຊ່າງ, ຊາວຫັດຖະກອນ ແລະອື່ນໆ.

## ມາດຕາ 15. ສິດ ແລະ ພັນທະຂອງເຈົ້າກຳມະສິດເອກະເທດ

ເຈົ້າກຳມະສິດເອກະເທດມີສິດດຳເນີນການຜະລິດ, ການບໍລິການ ແລະ ຈຳໜ່າຍຜະລິດຕະພັນຂອງຕົນຢ່າງເສລີຖືກກົດໝາຍ.

ເຈົ້າກຳມະສິດເອກະເທດ ຈະຕ້ອງປະຕິບັດຕາມກົດໝາຍ, ນະໂຍບາຍເສດຖະກິດ ແລະ ນະໂຍບາຍອື່ນໆຂອງລັດ, ມີພັນທະເສຍພາສີໃຫ້ລັດຢ່າງຄົບຖ້ວນ.

## ມາດຕາ 16. ເປົ້າໝາຍກຳມະສິດເອກະຊົນ

ກຳມະສິດເອກະຊົນມີພາຫະນະການຜະລິດ, ຜະລິດຕະພັນ, ສິນຄ້າ ແລະ ທຶນຮອນໃນການດຳເນີນທຸລະກິດຂອງຫົວໜ່ວຍເສດຖະກິດທີ່ເປັນກຳມະສິດສ່ວນບຸກຄົນຂອງເຈົ້າຂອງວິສາຫະກິດເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

ຫົວໜ່ວຍເສດຖະກິດນີ້ເປັນຜູ້ຄຸ້ມຄອງ ແລະ ແກ້ໄຂບັນຫາການຜະລິດທຸລະກິດ, ຮັບຜິດຊອບຕໍ່ລາຍຮັບ, ລາຍຈ່າຍ, ກຳໄລ ຫລື ການຫລຸບທຶນດ້ວຍຕົນເອງ.

## ມາດຕາ 17. ສິດ ແລະພັນທະຂອງຫົວໜ່ວຍເສດຖະກິດເອກະຊົນ

ຫົວໜ່ວຍເສດຖະກິດເອກະຊົນ ມີສິດດຳເນີນການຜະລິດ-ທຸລະກິດ, ການກໍ່ສ້າງ, ການຂົນສົ່ງ, ການຄ້າ, ການບໍລິການ ແລະ ເຄື່ອນໄຫວເຮັດສັນຍາຕ່າງໆ, ນຳໃຊ້ເງິນຕາເພື່ອສັ່ງຊື້ວັດຖຸດິບ, ວັດຖຸປະກອບ ແລະ ອື່ນໆຈາກຕ່າງປະເທດ, ຈຳໜ່າຍຜະລິດຕະພັນຂອງຕົນຢ່າງເສລີຖືກກົດໝາຍ, ຮ່ວມມືທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດ.

ຫົວໜ່ວຍເສດຖະກິດດັ່ງກ່າວຕ້ອງດຳເນີນການຜະລິດທຸລະກິດ ຕາມຂອບເຂດທະບຽນວິສາຫະກິດຂອງຕົນ, ນອກຈາກນີ້ຍັງຈະໄດ້ປະຕິບັດຕາມກົດໝາຍ, ນະໂຍບາຍເສດຖະກິດ ແລະ ນະໂຍບາຍອື່ນໆຂອງລັດຢ່າງເຂັ້ມງວດ, ມີພັນທະເສຍພາສີໃຫ້ລັດຢ່າງຄົບຖ້ວນ ແລະ ຖືບັນຊີໃຫ້ຖືກຕ້ອງຕາມກົດໝາຍການບັນຊີ.

## ມາດຕາ 18. ການຮັບຮູ້ສິດເປັນເຈົ້າຂອງຫົວໜ່ວຍເສດຖະກິດເອກະຊົນ

ຫົວໜ່ວຍເສດຖະກິດເອກະຊົນ ມີຖານະນິຕິບຸກຄົນ.

ລັດຮັບຮູ້ສິດກ່ຽວກັບກຳມະສິດໃນຊັບສິ່ງຂອງຕ່າງໆ ຂອງຫົວໜ່ວຍເສດຖະກິດເອກະຊົນ.

ບໍ່ມີບຸກຄົນໃດຈະລະເມີດສິດຂອງຫົວໜ່ວຍເສດຖະກິດນີ້ໄດ້.

## ມາດຕາ 19. ມາດຕະການຕໍ່ຫົວໜ່ວຍເສດຖະກິດເອກະຊົນ

ໃນກໍລະນີທີ່ຫົວໜ່ວຍເສດຖະກິດເອກະຊົນ ຫາກໄດ້ດຳເນີນການຜະລິດທຸລະກິດ ນອກວັດຖຸປະສົງທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ ຫລື ໄດ້ລະເມີດລະບຽບການເຊັ່ນ ບໍ່ຖືບັນຊີຕາມກົດໝາຍການບັນຊີ, ບໍ່ເສຍຄ່າທຳນຽມຕາມກຳນົດເວລາ, ປອມແປງ ຫລື ມອບໃບທະບຽນວິສາຫະກິດ

ໃຫ້ບຸກຄົນອື່ນຢືມ ຫລື ເຊົ່າແລ້ວເຈົ້າຂອງຫົວໜ່ວຍເສດຖະກິດນັ້ນ ກໍຈະໄດ້ຖືກປະຕິບັດມາດຕະການທີ່ໄດ້ກຳນົດໄວ້ໃນລະບຽບກ່ຽວກັບການຂຶ້ນທະບຽນວິສາຫະກິດເອກະຊົນ.

**ມາດຕາ 20. ເປົ້າໝາຍກຳມະສິດສ່ວນຕົວ**

ກຳມະສິດສ່ວນຕົວມີ ເຄື່ອງໃຊ້ສອຍ, ສິ່ງຂອງຊົມໃຊ້ສ່ວນຕົວ, ສິ່ງຂອງອຳນວຍຄວາມສະດວກ, ເຮືອນຢູ່, ເຄື່ອງເຮືອນ, ສັດລ້ຽງຕ່າງໆ ແລະ ລາຍໄດ້ອື່ນໆ.

**ມາດຕາ 21. ເນື້ອໃນຂອງກຳມະສິດສ່ວນຕົວ**

ເຈົ້າກຳມະສິດ ມີສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊີ້ຂາດກ່ຽວກັບຊັບສິ່ງຂອງ ແລະ ລາຍໄດ້ຂອງຕົນຕາມຄວາມຕ້ອງການ ແຕ່ຈະນຳໃຊ້ຊັບສິ່ງຂອງ ຂອງຕົນໄປທຳລາຍຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງລັດ, ລວມໝູ່ ແລະ ຂອງບຸກຄົນອື່ນນັ້ນແມ່ນບໍ່ໄດ້.

**ມາດຕາ 22. ການຈັບຈອງທີ່ດິນໄວ້ລ້າໆ**

ບຸກຄົນຜູ້ໃດຫາກໄດ້ຈັບຈອງທີ່ດິນໄວ້ລ້າໆ ໂດຍບໍ່ທຳການບຸກເບີກ ຫລື ຜະລິດແຕ່ຢ່າງໃດ ບຸກຄົນຜູ້ນັ້ນກໍຈະໄດ້ຖືກປັບໄໝຕາມລະບຽບການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນກະສິກຳ ຫລື ລັດອາດຈະໂອນເອົາທີ່ດິນນັ້ນໃຫ້ບຸກຄົນອື່ນນຳໃຊ້ ໂດຍບໍ່ມີການທົດແທນຄ່າຄືນໃຫ້ແຕ່ຢ່າງໃດ.

**ມາດຕາ 23. ການຮິບ ແລະ ການຢຶດຊັບສິ່ງຂອງ ຂອງເອກະເທດ, ເອກະຊົນ ແລະ ຂອງສ່ວນຕົວ**

ຊັບສິ່ງຂອງ ຂອງເອກະເທດ, ເອກະຊົນ ແລະ ຂອງສ່ວນຕົວອາດຈະຮິບ ຫລື ຢຶດໄດ້. ແຕ່ສະບຽງອາຫານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍ, ສັດລ້ຽງ ທີ່ຈຳເປັນສຳລັບການເປັນຢູ່ຂອງບຸກຄົນທີ່ເປັນລູກໜີ້ ແລະ ຂອງຜູ້ທີ່ຢູ່ໃຕ້ຄວາມດູແລຂອງຜູ້ກ່ຽວນີ້ ແລະ ຊັບສິ່ງຂອງອື່ນໆຕາມບັນຊີທີ່ໄດ້ບົ່ງໄວ້ໃນກົດໝາຍອາຍານັ້ນ ບໍ່ອາດຈະຮິບໄດ້.

**ມາດຕາ 24. ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ**

ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ ມີລາຍໄດ້ສ່ວນຕົວຈາກການອອກແຮງງານຂອງສະມາຊິກຄອບຄົວສະຫະກອນ ແລະ ຊັບສິ່ງຂອງທີ່ສະມາຊິກນັ້ນຫາມາໄດ້ດ້ວຍຕົນເອງ ຫລື ໄດ້ຮັບຕາມການສືບທອດມູນມໍຣະດົກ ຫລື ຕາມການມອບຊຶ່ງບໍ່ໄດ້ມອບເຂົ້າເປັນກຳມະສິດຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆນັ້ນ.

ຊັບສິ່ງຂອງທີ່ເປັນກຳມະສິດສະເພາະຂອງສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆ ຕາມລະບຽບທີ່ໄດ້ບົ່ງໄວ້ນັ້ນ ບໍ່ອາດຈະເອົາມາເປັນກຳມະສິດສ່ວນຕົວ ຂອງສະມາຊິກຄອບຄົວສະຫະກອນ ຫລື ອົງການຈັດຕັ້ງລວມໝູ່ອື່ນໆໄດ້.

## ມາດຕາ 25. ກຳມະສິດລວມ

ຊັບສິ່ງຂອງໃດໜຶ່ງອາດຈະເປັນກຳມະສິດລວມ ລະຫວ່າງອົງການຈັດຕັ້ງຂອງລັດ ຫລື ລວມໝູ່ດ້ວຍກັນ, ລະຫວ່າງອົງການຈັດຕັ້ງຂອງລັດ ຫລື ລວມໝູ່ກັບບຸກຄົນ ແລະ ລະຫວ່າງບຸກຄົນດ້ວຍກັນ ເຊັ່ນ ວິສາຫະກິດ, ອາຄານ, ເຮືອນ, ຮົ້ວ, ເດີ່ນ.

ເຈົ້າກຳມະສິດລວມ ມີສິດຄອບຄອງ, ນຳໃຊ້ຊັບສິ່ງຂອງຮ່ວມກັນ, ໄດ້ຮັບໝາກຜົນ ແລະ ຊື້ຂາຍດ້ວຍການຕົກລົງເຫັນດີນຳກັນ, ແຕ່ລະຄົນຕ້ອງຮັບຜິດຊອບຮ່ວມກັນ ໃນການເສັຍພາສີ, ການປົກປັກຮັກສາ, ການສ້ອມແປງ, ໜີ້ສິນ ແລະ ການ ໃຊ້ຈ່າຍອື່ນໆ.

ເຈົ້າກຳມະສິດລວມແຕ່ລະຄົນ ມີສິດຮ້ອງຂໍແຍກພູດຂອງຕົນອອກຈາກ ກຳມະສິດລວມດ້ວຍການຕົກລົງເຫັນດີນຳກັນ. ຖ້າວ່າຊັບສິ່ງຂອງທີ່ເປັນກຳມະສິດລວມນັ້ນ ຫາກບໍ່ສາມາດຕັດແຍກອອກຈາກກັນໄດ້ ກໍໃຫ້ທົດແທນຕາມມູນຄ່າຂອງພູດທີ່ຢາກຕັດແຍກອອກນັ້ນກໍໄດ້.

## ມາດຕາ 26. ສິນສົມສ້າງ

ສິນສົມສ້າງຂອງຄູ່ຜົວເມັຽ ແມ່ນ ຊັບສົມບັດທີ່ຄູ່ຜົວເມັຽນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມັຽນຳກັນ ເວັ້ນເສັຽແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ.

ຜົວເມັຽແຕ່ລະຄົນມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງໂດຍບໍ່ຂຶ້ນກັບວ່າ ຈະແມ່ນຜົວ ຫລື ເມັຽເປັນຜູ້ຫາຊັບສົມບັດນັ້ນມາໄດ້.

ຈະບໍ່ຖືວ່າເປັນສິນສົມສ້າງ ສຳລັບຊັບສົມບັດທີ່ເປັນຂອງຜົວ ຫລື ເມັຽທີ່ໄດ້ມາກ່ອນການແຕ່ງດອງ ຫລື ທີ່ໄດ້ຮັບຈາກການສືບທອດມູນມໍຣະດົກ ຫລື ຈາກການມອບຊັບທີ່ໄດ້ບົ່ງໄວ້ໃຫ້ເປັນຂອງຜົວ ຫລື ເມັຽ ສະເພາະໃນເວລາເປັນຜົວເມັຽກັນນັ້ນ.

ຊັບສິ່ງຂອງທີ່ໄດ້ນຳໃຊ້ເປັນສ່ວນຕົວ ເຊັ່ນເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສະເພາະອື່ນໆ ເຖິງວ່າຊັບສິ່ງຂອງດັ່ງກ່າວຈະໄດ້ມາໃນເວລາເປັນຜົວເມັຽກັນນັ້ນກໍຕາມ ຈະບໍ່ຖືວ່າເປັນສິນສົມສ້າງ ເວັ້ນເສັຽແຕ່ວັດຖຸທີ່ມີຄ່າ ເຊັ່ນ: ເພັດນິນຈິນດາ, ຄຳ, ເຄື່ອງເອ້ທີ່ມີຄ່າອື່ນໆ.

## ມາດຕາ 27. ການແບ່ງປັນສິນສົມສ້າງ

ສິນສົມສ້າງຈະໄດ້ແບ່ງປັນກັນ ພາຍຫລັງທີ່ຜົວເມັຽນັ້ນໄດ້ຢ່າຮ້າງກັນ. ໃນກໍລະນີທີ່ຜົວເມັຽຫາກໄດ້ແຍກກັນຢູ່ ຫລື ຜົວ ຫລື ເມັຽຫາກໄດ້ລັກເອົາສິນສົມສ້າງໄປນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫລື ບໍ່ມີຄວາມບໍລິສຸດໃຈຕໍ່ສິນສົມສ້າງນັ້ນ ອາດຈະແບ່ງປັນສິນສົມສ້າງໃນເວລາທີ່ບໍ່ທັນໄດ້ຢ່າຮ້າງກັນກໍໄດ້.

ຜົວ ແລະ ເມັຽຈະໄດ້ຮັບສ່ວນແບ່ງປັນສິນສົມສ້າງທໍ່ກັນໃນກໍລະນີທົ່ວໄປ.

ຖ້າວ່າຜົວ ຫລື ເມັຽ ຫາກເປັນຜູ້ມີຄວາມຜິດຕໍ່ສາຍ ຜົວເມັຽ ຫລື ຕໍ່ສິນສົມສ້າງແລ້ວ ຝ່າຍທີ່ຜິດນັ້ນ ກໍຈະໄດ້ຮັບພຽງແຕ່ ໜຶ່ງສ່ວນສາມ ຂອງສິນສົມສ້າງເທົ່ານັ້ນ.

ໃນກໍລະນີທີ່ລູກຍັງບໍ່ທັນເຖິງກະສຽນອາຍຸຫາກໄດ້ຢູ່ນຳຜູ້ໃດ ຜູ້ນັ້ນອາດຈະໄດ້ຮັບສ່ວນແບ່ງປັນຫລາຍກ່ວາ ໂດຍແມ່ນສານຈະເປັນຜູ້ຕັດສິນ.

## ໝວດທີ 5 ວ່າດ້ວຍການໄດ້ ແລະ ການສິ້ນສຸດກຳມະສິດ

**ມາດຕາ 28. ການໄດ້ມາເປັນກຳມະສິດ**

ການໄດ້ມາເປັນກຳມະສິດ ແມ່ນ ເກີດຂຶ້ນນັບແຕ່ເວລາທີ່ໄດ້ມອບ ຫລື ໄດ້ຮັບຊັບສິ່ງຂອງນັ້ນໂດຍຖືກຕ້ອງຕາມກົດໝາຍ. ກຳມະສິດອາດຈະໄດ້ມາຕາມສັນຍາກ່ອນການມອບ ຫລື ການຮັບຊັບສິ່ງຂອງນັ້ນກໍໄດ້.

ຖ້າວ່າສັນຍາມອບຊັບສິ່ງຂອງໃຫ້ບຸກຄົນອື່ນ ຫລື ຊັບສິ່ງຂອງນັ້ນຫາກຍັງຈະຕ້ອງໄດ້ຂຶ້ນທະບຽນແລ້ວ ກຳມະສິດ ແມ່ນໄດ້ມານັບແຕ່ເວລາທີ່ໄດ້ຂຶ້ນທະບຽນເປັນຕົ້ນໄປ ເຖິງວ່າຊັບສິ່ງຂອງນັ້ນຈະໄດ້ມອບໃຫ້ແກ່ກັນແລ້ວ ກໍຕາມ.

**ມາດຕາ 29. ການມອບຊັບສິ່ງຂອງ**

ການມອບຊັບສິ່ງຂອງ ແມ່ນ ການເອົາຊັບສິ່ງຂອງໃຫ້ອົງການຈັດຕັ້ງ ຫລື ບຸກຄົນໃດໜຶ່ງຊຶ່ງເອີ້ນວ່າຜູ້ຮັບ.ການມອບຊັບສິ່ງຂອງໃຫ້ຜູ້ຂົນສົ່ງ ຫລື ໄປສະນີ ເພື່ອສົ່ງໄປໃຫ້ຜູ້ຮັບ ແລະ ການມອບເອກະສານຂົນສົ່ງສິນຄ້າ ຫລື ເຄື່ອງບັນທຸກຕ່າງໆນັ້ນກໍຈະຖືວ່າເປັນການມອບຊັບສິ່ງຂອງໃຫ້ຜູ້ຮັບແລ້ວ.

**ມາດຕາ 30. ການຄອບຄອງທີ່ຖືກກົດໝາຍ**

ການຄອບຄອງທີ່ຖືກກົດໝາຍ ແມ່ນການຄອບຄອງຊັບສິ່ງຂອງໂດຍບຸກຄົນໃດບຸກຄົນໜຶ່ງທີ່ຖືກຕ້ອງຕາມລະບຽບຫລັກການໄດ້ກຳນົດໄວ້. ສຳລັບຊັບຄົງທີ່ ຊຶ່ງຕ້ອງໄດ້ຂຶ້ນທະບຽນນັ້ນກໍຈະໃຫ້ບຸກຄົນທີ່ມີຊື່ໃນໃບທະບຽນເປັນຜູ້ຄອບຄອງ ຫລື ຜູ້ທີ່ໄດ້ຮັບສິດຈາກຜູ້ກ່ຽວເປັນຜູ້ຄອບຄອງ.

**ມາດຕາ 31. ການຄອບຄອງວັດຖຸສິ່ງຂອງຕາມການອະນຸຍາດພິເສດ**

ວັດຖຸສິ່ງຂອງບາງປະເພດເຊັ່ນ: ອາວຸດ, ທາດເບື່ອ, ບາງທາດໂລຫະທີ່ມີຄ່າຈະໃຫ້ບຸກຄົນໃດບຸກຄົນໜຶ່ງຄອບຄອງໄດ້ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດພິເສດ ຈາກອົງການທີ່ມີສິດ ອຳນາດກ່ຽວຂ້ອງເທົ່ານັ້ນ.

**ມາດຕາ 32. ລະບຽບການກ່ຽວກັບການມອບວັດຖຸບູຮານ ແລະ ສິ່ງທີ່ກໍ່ສ້າງສິນລະປະວັນນະກຳ ໃຫ້ບຸກຄົນອື່ນ.**

ວັດຖຸບູຮານ ຫລື ສິ່ງທີ່ກໍ່ສ້າງສິນລະປະວັນນະກຳນັ້ນ ຈະຂາຍ ຫລືມອບໃຫ້ບຸກຄົນອື່ນໄດ້ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດຈາກອົງການປົກປັກຮັກສາບູຮານວັດຖຸເທົ່ານັ້ນ. ລັດເປັນຜູ້ມີບູລິມະສິດໃນການຊື້ວັດຖຸບູຮານເຫລົ່ານັ້ນກ່ອນຜູ້ອື່ນ.

ການຂາຍ ຫລື ການມອບວັດຖຸບູຮານດັ່ງກ່າວໃຫ້ບຸກຄົນອື່ນທີ່ຂັດກັບວັກເທິງນີ້ຈະຖືວ່າເປັນໂມຄະ ແລະ ຈະໄດ້ປະຕິບັດຕາມລະບຽບການຂອງສັນຍາທີ່ເປັນໂມຄະ.

## ມາດຕາ 33. ການສູນຫາຍ ຫລື ການເປ່ເພຂອງຊັບສິ່ງຂອງ ໂດຍເຫດບັງເອີນ ຫລື ເຫດສຸດວິໄສໃນເວລາມອບ.

ການສູນຫາຍ ຫລື ການເປ່ເພຂອງຊັບສິ່ງຂອງໂດຍເຫດບັງເອີນ ຫລື ເຫດສຸດວິໄສໃນເວລາມອບຊັບສິ່ງຂອງນັ້ນ ແມ່ນ ເລື່ອງທີ່ໄດ້ເກີດຂື້ນໃນເວລາມອບຊັບສິ່ງຂອງໃຫ້ກັນ ຊຶ່ງບໍ່ເປັນຄວາມຜິດຂອງຜູ້ມອບ, ຜູ້ຂົນສົ່ງ ຫລື ຜູ້ຮັບ. ໃນກໍລະນີທີ່ເກີດມີການສູນຫາຍ ຫລື ການເປ່ເພໂດຍເຫດບັງເອີນ ຫລື ເຫດສຸດວິໄສນັ້ນ ບຸກຄົນທີ່ເປັນເຈົ້າຂອງກຳມະສິດຊັບສິ່ງຂອງໃນເວລານັ້ນ ຈະເປັນຜູ້ຮັບຜິດຊອບເອົາເອງ ຕໍ່ຜົນເສັຍຫາຍດັ່ງກ່າວຖ້າວ່າສັນຍາຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ.

ຖ້າວ່າຜູ້ມອບ, ຜູ້ຂົນສົ່ງ ຫລື ຜູ້ຮັບຊັບສິ່ງຂອງຫາກໄດ້ເຮັດຊັກຊ້າໃນການມອບ, ຂົນສົ່ງ ຫລື ຮັບແລ້ວຜູ້ກ່ຽວກໍຈະໄດ້ຮັບຜິດຊອບຕໍ່ການສູນຫາຍ ຫລື ເປ່ເພທີ່ເນື່ອງຈາກເຫດບັງເອີນ ຫລື ເຫດສຸດວິໄສນັ້ນ.

## ມາດຕາ 34. ກຳມະສິດກ່ຽວກັບຫມາກຜົນ ແລະ ລາຍໄດ້

ຫມາກຜົນ, ລາຍໄດ້ທີ່ໄດ້ມາຈາກຊັບສິ່ງຂອງໃດຫນຶ່ງ ກໍຈະເປັນຂອງເຈົ້າກຳມະສິດກ່ຽວກັບຊັບສິ່ງຂອງເຫລົ່ານັ້ນ ຖ້າວ່າກົດຫມາຍ ຫລື ສັນຍາຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ.

## ມາດຕາ 35. ກຳມະສິດກ່ຽວກັບມູນມໍຣະດົກ

ມູນມໍຣະດົກທີ່ຜູ້ສືບທອດໄດ້ຮັບຈາກການສືບທອດຕາມກົດຫມາຍ ຫລື ຕາມພິໄນກຳນັ້ນ ແມ່ນເປັນກຳມະສິດຂອງຜູ້ສືບທອດ ນັບແຕ່ເວລາທີ່ໄດ້ຮັບເອົາມູນມໍຣະດົກເປັນຕົ້ນໄປ.

ໃນກໍລະນີ ທີ່ບໍ່ມີຜູ້ສືບທອດແລ້ວ ມູນມໍຣະດົກທັງຫມົດກໍຈະຕົກທອດມາເປັນຂອງລັດ ເວັ້ນເສັຽແຕ່ມູນມໍຣະດົກນັ້ນ ຫາກເປັນຂອງພິຊຸ ສາມະເນນ ຊຶ່ງໄດ້ບົ່ງໄວ້ໃນມາດຕາ 23 ຂອງກົດຫມາຍວ່າດ້ວຍການສືບທອດມູນມໍຣະດົກ.

## ມາດຕາ 36. ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ

ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ແມ່ນຊັບສິ່ງຂອງທີ່ເຈົ້າກຳມະສິດໄດ້ຖອນສິດຄອບຄອງຊັບສິ່ງຂອງ ຫລື ໄດ້ເສັຽສິດຄອບຄອງຊັບສິ່ງຂອງນັ້ນ ຍ້ອນກຳນົດເວລາຂອງອາຍຸຄວາມໃນການຮ້ອງຟ້ອງໄດ້ຫມົດໄປ ຫລື ທີ່ບໍ່ຮູ້ແຈ້ງວ່າບຸກຄົນຜູ້ໃດເປັນເຈົ້າກຳມະສິດ.

ມີແຕ່ອົງການການເງິນເທົ່ານັ້ນ ຈຶ່ງມີສິດສະເຫນີໃຫ້ສານຕັດສິນເອົາຊັບສິ່ງຂອງ ທີ່ບໍ່ມີເຈົ້າຂອງນັ້ນເປັນກຳມະສິດຂອງລັດ. ຖ້າວ່າຊັບສິ່ງຂອງຫາກເປັນຂອງຄອບຄົວສະມາຊິກສະຫະກອນທີ່ໄດ້ຖອນ ຫລື ເສັຽສິດນັ້ນ ຊັບສິ່ງຂອງດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງສະຫະກອນ ບ່ອນທີ່ຊັບສິ່ງຂອງນັ້ນຕັ້ງຢູ່.

## ມາດຕາ 37. ວິທີປະຕິບັດກ່ຽວກັບຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ

ຊັບສິ່ງຂອງທີ່ໄດ້ຮັບຮູ້ວ່າບໍ່ມີເຈົ້າຂອງນັ້ນ ຈະມອບເຂົ້າບັນຊີຊັບສິ່ງຂອງຂອງລັດ.

ພາຍຫລັງທີ່ຊັບສິ່ງຂອງດັ່ງກ່າວຫາກໄດ້ມອບໃຫ້ລັດແລ້ວເຈົ້າກຳມະສິດກໍຍັງມີສິດຍື່ນຄຳຮ້ອງຟ້ອງຕໍ່ສານ ເພື່ອທວງເອົາຊັບສິ່ງຂອງນັ້ນຄືນ ຫລື ຮ້ອງຂໍເອົາການໃຊ້ແທນຄ່າເສັຽຫາຍ ຖ້າວ່າກຳນົດເວລາຂອງອາຍຸຄວາມໃນການຮ້ອງຟ້ອງທີ່ໄດ້ບົ່ງໄວ້ໃນມາດຕາ 35 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາຫາກຍັງບໍ່ທັນໝົດ.

## ມາດຕາ 38. ການເກັບຊັບສິ່ງຂອງທີ່ຕົກເຮັ່ຽ

ຜູ້ທີ່ເກັບຊັບສິ່ງຂອງທີ່ຕົກເຮັ່ຽບໍ່ວ່າຢູ່ໃນສະຖານທີ່ໃດ ກໍມີພັນທະແຈ້ງໃຫ້ບຸກຄົນທີ່ໄດ້ເຮັດຊັບສິ່ງຂອງທີ່ຕົກເຮັ່ຽນັ້ນຊາບໃນທັນໃດ ຖ້າຫາກຮູ້ຕົວບຸກຄົນນັ້ນ ແລະ ສົ່ງຊັບສິ່ງຂອງທີ່ເກັບໄດ້ນັ້ນຄືນໃຫ້ຜູ້ກ່ຽວ ຫລື ແຈ້ງໃຫ້ຊາບກ່ຽວກັບການເກັບຊັບສິ່ງຂອງທີ່ຕົກເຮັ່ຽ ແລະ ມອບຊັບສິ່ງຂອງດັ່ງກ່າວໃຫ້ເຈົ້າໜ້າທີ່ຕຳຫລວດ ຫລື ນາຍບ້ານຮັກສາ ຫລື ມອບໃຫ້ຄະນະອຳນວຍການວິສາຫະກິດ ຫລື ສຳນັກງານທີ່ກ່ຽວຂ້ອງຮັກສາໄວ້ ຖ້າວ່າຊັບສິ່ງຂອງທີ່ຕົກເຮັ່ຽນັ້ນຫາກໄດ້ພົບເຫັນ ຫລື ເກັບໄດ້ຢູ່ວິສາຫະກິດ ຫລື ສຳນັກງານນັ້ນ.

ໃນບາງກໍລະນີອາດຈະມອບຊັບສິ່ງຂອງທີ່ຕົກເຮັ່ຽນັ້ນໃຫ້ເປັນກຳມະສິດຂອງຜູ້ທີ່ເກັບໄດ້ ຫລືອາດຈະມອບໃຫ້ເປັນກຳມະສິດຂອງລັດ ໂດຍບໍ່ມີການທົດແທນກໍໄດ້ ຖ້າວ່າຜູ້ເປັນເຈົ້າຂອງຊັບສິ່ງຂອງຫາກບໍ່ໄດ້ທັກທວງເອົາຄືນພາຍໃນກຳນົດເວລາຫົກເດືອນ ນັບແຕ່ມື້ທີ່ຜູ້ເກັບໄດ້ແຈ້ງເປັນຕົ້ນໄປ.

## ມາດຕາ 39. ການທົດແທນຄ່າໃຊ້ຈ່າຍໃຫ້ຜູ້ທີ່ເກັບຊັບສິ່ງຂອງຕົກເຮັ່ຽ

ຜູ້ເກັບໄດ້ ແລະ ຜູ້ທີ່ສົ່ງຊັບສິ່ງຂອງທີ່ຕົກເຮັ່ຽຄືນກໍມີສິດໄດ້ຮັບການທົດແທນຄ່າໃຊ້ຈ່າຍໃນການຮັກສາ ແລະ ການມອບຊັບສິ່ງຂອງທີ່ຕົກເຮັ່ຽນັ້ນຄືນໃຫ້ຜູ້ເປັນເຈົ້າຂອງເດີມ. ໃນກໍລະນີທີ່ຊັບສິ່ງຂອງຖືກຕົກເຮັ່ຽນັ້ນ ຫາກໄດ້ມອບໃຫ້ເປັນກຳມະສິດຂອງລັດແລ້ວ ກໍແມ່ນໃຫ້ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງເປັນຜູ້ທົດແທນ.

ຜູ້ທີ່ເກັບຊັບສິ່ງຂອງທີ່ຕົກເຮັ່ຽກໍມີສິດຮຽກຮ້ອງເອົາລາງວັນຢ່າງຫລາຍບໍ່ໃຫ້ເກີນ ສິບຫ້າສ່ວນຮ້ອຍ ຂອງມູນຄ່າຂອງຊັບສິ່ງຂອງທີ່ຕົກເຮັ່ຽ ຈາກຜູ້ເປັນເຈົ້າຂອງ ຫລື ບຸກຄົນທີ່ມີສິດຮັບເອົາຊັບສິ່ງຂອງທີ່ຕົກເຮັ່ຽນັ້ນ.

ໃນກໍລະນີ ທີ່ຜູ້ເກັບຊັບສິ່ງຂອງທີ່ຖືກຕົກເຮັ່ຽຫາກບໍ່ໄດ້ແຈ້ງໃນທັນໃດແລ້ວ ຜູ້ເກັບໄດ້ນັ້ນກໍຈະບໍ່ໄດ້ຮັບລາງວັນແຕ່ຢ່າງໃດ.

## ມາດຕາ 40. ສັດຊື່ງຂາດການຮັກສາ

ບຸກຄົນຜູ້ໃດທີ່ໄດ້ຈັບສັດຊຶ່ງຂາດການຮັກສາ ຫລື ສັດທີ່ປະປ່ອຍ ບຸກຄົນຜູ້ນັ້ນ ຕ້ອງແຈ້ງໃຫ້ເຈົ້າຂອງສັດຊາບໃນທັນໃດ ແລະ ສົ່ງສັດຄືນໃຫ້ຜູ້ກ່ຽວ ຫລື ແຈ້ງໃຫ້ເຈົ້າໜ້າທີ່ຕຳຫລວດ ຫລື ນາຍບ້ານຊາບ ພາຍໃນກຳນົດ ສາມມື້ ນັບແຕ່ມື້ທີ່ໄດ້ຈັບສັດນັ້ນເປັນຕົ້ນໄປ.

ຖ້າວ່າເຈົ້າຂອງສັດຫາກຍັງບໍ່ທັນໄດ້ທວງຫາວເອົາແລ້ວ ສັດດັ່ງກ່າວກໍຈະມອບໃຫ້ຜູ້ຈັບໄດ້ນັ້ນເປັນຜູ້ຮັກສາ, ລ້ຽງເກືອ ແລະ ນຳໃຊ້.

ໃນກໍລະນີທີ່ໄດ້ພົບເຫັນເຈົ້າຂອງສັດພາຍໃນກຳນົດ ຫົກເດືອນ ນັບແຕ່ມື້ທີ່ໄດ້ແຈ້ງເປັນຕົ້ນໄປ ສັດນັ້ນກໍຈະໄດ້ສົ່ງຄືນໃຫ້ເຈົ້າຂອງ ແຕ່ຜູ້ກ່ຽວກໍຕ້ອງທົດແທນຄ່າໃຊ້ຈ່າຍໃນການລ້ຽງເກືອສັດ ແລະ ໃຫ້ລາງວັນຕາມມາດຕາ 39 ເທິງນີ້.

ຖ້າວ່າຜູ້ຈັບສັດໄດ້ຫາກມີຄວາມຫຍຸ້ງຍາກໃນການຮັກສາ ຫລື ລ້ຽງເກືອ ຫລື ມີການເລີ່ມເກີດພະຍຸສັດແລ້ວ ຜູ້ຮັກສາອາດຈະຂາຍສັດນັ້ນກໍໄດ້ ພາຍຫລັງທີ່ໄດ້ແຈ້ງ ແລະ ໄດ້ຮັບຄວາມເຫັນດີຈາກເຈົ້າຫນ້າທີ່ ຫລື ນາຍບ້ານແລ້ວ ແຕ່ກໍຕ້ອງຮັກສາເງິນທີ່ຂາຍນັ້ນໄວ້ໃຫ້ເຈົ້າຂອງສັດດັ່ງກ່າວ.

ໃນກໍລະນີທີ່ບໍ່ອາດຈະພົບເຫັນເຈົ້າຂອງສັດໄດ້ພາຍໃນກຳນົດ ຫົກເດືອນນັ້ນແລ້ວ ເຈົ້າຂອງສັດກໍຈະເສັຽກຳມະສິດກ່ຽວກັບສັດນັ້ນ.

## ມາດຕາ 41. ການພົບພໍ້ວັດຖຸທີ່ມີຄ່າ ຫລື ວັດຖຸບູຮານ

ວັດຖຸທີ່ມີຄ່າ ມີ: ຄຳ, ເງິນ ຫລື ໂລຫະ, ແຮ່ທາດທີ່ມີຄ່າຊຶ່ງເຊື່ອງຊ້ອນ ຫລື ຝັງໄວ້ຢູ່ໃນດິນ ຫລື ຖືກຊຸກເຊື່ອງໄວ້ດ້ວຍວິທີໃດວິທີຫນຶ່ງ ຊຶ່ງບໍ່ອາດຈະກຳນົດໄດ້ວ່າ ບຸກຄົນຜູ້ໃດເປັນເຈົ້າກຳມະສິດ ຫລື ເຈົ້າກຳມະສິດນັ້ນໄດ້ເສັຽສິດ ກ່ຽວກັບວັດຖຸທີ່ມີຄ່ານີ້ແລ້ວ ຫລື ບໍ່ອາດຈະອ້າງຕົນວ່າເປັນເຈົ້າກຳມະສິດໄດ້. ໃນກໍລະນີນີ້ວັດຖຸທີ່ມີຄ່າດັ່ງກ່າວ ຈະຕົກເປັນກຳມະສິດຂອງລັດ ແລະ ບຸກຄົນທີ່ໄດ້ພົບພໍ້ນັ້ນ ຕ້ອງເອົາໄປມອບໃຫ້ອົງການການເງິນ.

ບຸກຄົນທີ່ໄດ້ພົບພໍ້ ແລະ ໄດ້ມອບວັດຖຸທີ່ມີຄ່າ ຫລື ວັດຖຸບູຮານນັ້ນ ມີສິດໄດ້ຮັບລາງວັນ ຫລື ຄ່າບຳເນັດ ສິບຫ້າສ່ວນຮ້ອຍ ຂອງມູນຄ່າວັດຖຸທີ່ມີຄ່ານັ້ນ ເວັ້ນເສັຽແຕ່ການຄົ້ນພົບ ຫລື ການພົບພໍ້ນັ້ນຫາກເປັນຫນ້າທີ່ໂດຍກົງຂອງຜູ້ກ່ຽວເອງ.

## ມາດຕາ 42. ການໄດ້ມາເປັນກຳມະສິດ ເນື່ອງຈາກການຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນ ໂດຍຄວາມບໍລິສຸດໃຈ.

ບຸກຄົນຜູ້ໃດທີ່ໄດ້ຄອບຄອງຊັບສິ່ງຂອງຂອງບຸກຄົນອື່ນໂດຍຄວາມບໍລິສຸດໃຈ ຄືກັນກັບວ່າຕົນເອງເປັນເຈົ້າຂອງຊັບສິ່ງຂອງນັ້ນເປັນເວລາ ຊາວປີ ຕໍ່ເນື່ອງກັນ ຖ້າຫາກແມ່ນຊັບຄົງທີ່ແລະ ເປັນເວລາ ຫ້າປີ ຕໍ່ເນື່ອງກັນ ຖ້າຫາກແມ່ນຊັບເຄື່ອນທີ່ແລ້ວ ບຸກຄົນຜູ້ນັ້ນກໍຈະໄດ້ເປັນເຈົ້າກຳມະສິດກ່ຽວກັບຊັບສິ່ງຂອງນັ້ນ. ການຄອບຄອງໂດຍຄວາມບໍລິສຸດໃຈນັ້ນ ສະແດງອອກດ້ວຍການຄອບຄອງຊັບສິ່ງຂອງຢ່າງເປີດເຜີຍ, ຕໍ່ເນື່ອງ ແລະ ສະຫງົບ. ເມື່ອຮອດກຳນົດເວລາດັ່ງກ່າວນີ້ແລ້ວ ບຸກຄົນຜູ້ທີ່ເປັນເຈົ້າກຳມະສິດເດີມ ກ່ຽວກັບຊັບສິ່ງຂອງດັ່ງກ່າວ ຈະບໍ່ມີສິດຮ້ອງຟ້ອງເອົາຄືນໄດ້.

ຖ້າວ່າບຸກຄົນຜູ້ນັ້ນຫາກໄດ້ຄອບຄອງຊັບສິ່ງຂອງດັ່ງກ່າວ ຍັງບໍ່ທັນຈົບຕາມກຳນົດເວລາທີ່ໄດ້ກ່າວໄວ້ໃນວັກທີ 1 ນີ້ ແຕ່ຜູ້ກ່ຽວພັດໄດ້ມອບຊັບສິ່ງຂອງນັ້ນໃຫ້ບຸກຄົນອື່ນຄອບຄອງ ໂດຍຄວາມບໍລິສຸດໃຈແລ້ວ ກຳນົດເວລາທີ່ຈະໄດ້ມາເປັນກຳມະສິດນັ້ນ ກໍໃຫ້ນັບແຕ່ມື້ທີ່ບຸກຄົນຜູ້ທຳອິດໄດ້ຄອບຄອງນັ້ນເປັນຕົ້ນມາ, ເມື່ອຮອດກຳນົດເວລາທີ່ໄດ້ກ່າວນີ້ແລ້ວ ບຸກຄົນຜູ້ໃຫມ່ທີ່ຄອບຄອງກໍຈະໄດ້ຮັບກຳມະສິດນັ້ນເລີຍ.

ຊັບສິ່ງຂອງຂອງລັດ ຫລື ລວມຫມູ່ນັ້ນ ຈະບໍ່ຕົກເປັນກຳມະສິດຂອງຜູ້ຄອບຄອງໂດຍຄວາມບໍລິສຸດໃຈແຕ່ຢ່າງໃດ ເຖິງວ່າຈະກາຍກຳນົດເວລາທີ່ໄດ້ກ່າວໄວ້ໃນວັກທີ 1 ນີ້ແລ້ວກໍຕາມ.

## ມາດຕາ 43. ການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈໍາເປັນ

ການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈໍາເປັນ ແມ່ນ ລັດເອົາຊັບສິ່ງຂອງຈາກເຈົ້າກໍາມະສິດ ເພື່ອຮັບໃຊ້ຜົນປະໂຫຍດຂອງລັດ ຫລື ສັງຄົມໂດຍລັດຈະທົດແທນຄ່າຊັບສິ່ງຂອງນັ້ນໃຫ້ເຈົ້າຂອງຊັບຄືນ.

ການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈໍາເປັນ ຈະເຮັດໄດ້ກໍຕໍ່ເມື່ອຫາກມີຄວາມຈໍາເປັນ ຫລື ມີສະພາບການຮີບດ່ວນເທົ່ານັ້ນ ເຊັ່ນ ການພັດທະນາ, ການຕ້ານໄພທໍາມະຊາດ, ພະຍາດລະບາດ ແລະ ອື່ນໆ.

ຊັບສິ່ງຂອງທີ່ເຫມົາຊື້ດ້ວຍຄວາມຈໍາເປັນນັ້ນ ຈະຕ້ອງໄດ້ທົດແທນຄືນພາຍໃນກໍານົດເວລາອັນເຫມາະສົມໂດຍອີງຕາມສະພາບຕົວຈິງ.

ໃນກໍລະນີ ທີ່ມີການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈໍາເປັນໂດຍບໍ່ຖືກຕ້ອງນັ້ນແລ້ວ ເຈົ້າກໍາມະສິດ ມີສິດຍື່ນຄໍາຮ້ອງຕໍ່ອົງການຂັ້ນເທິງຂອງອົງການ ທີ່ໄດ້ມອບໃຫ້ພະນັກງານຂອງຕົນໄປທໍາການເຫມົາຊື້ຊັບສິ່ງຂອງ ແລະ ເຈົ້າກໍາມະສິດ ກໍຍັງມີສິດທວງເອົາຊັບສິ່ງຂອງຂອງຕົນຄືນ ພ້ອມທັງຄ່າເສັຽຫາຍຕ່າງໆອີກດ້ວຍ.

## ມາດຕາ 44. ການຮິບຊັບສິ່ງຂອງ.

ການຮິບຊັບສິ່ງຂອງ ແມ່ນການເອົາຊັບສິ່ງຂອງທັງຫມົດ ຫລື ສ່ວນໃດສ່ວນຫນຶ່ງ ຊຶ່ງເປັນກໍາມະສິດຂອງຜູ້ໃດຜູ້ຫນຶ່ງ ທີ່ໄດ້ລະເມີດກົດຫມາຍມາເປັນຂອງລັດ ໂດຍບໍ່ມີການທົດແທນ.

ການຮິບຊັບສິ່ງຂອງຈະປະຕິບັດຕໍ່ຜູ້ໃດຜູ້ຫນຶ່ງໄດ້ກໍຕໍ່ເມື່ອກົດຫມາຍຫາກໄດ້ບົ່ງໄວ້ສະເພາະເທົ່ານັ້ນ.

ໃນກໍລະນີ ທີ່ມີການຮິບຊັບສິ່ງຂອງໂດຍບໍ່ຖືກຕ້ອງແລ້ວ ຊັບສິ່ງຂອງນັ້ນ ກໍຈະໄດ້ສົ່ງຄືນໃຫ້ເຈົ້າກໍາມະສິດ ແລະ ເຈົ້າກໍາມະສິດກໍຍັງມີສິດຮ້ອງຂໍເອົາຄ່າເສັຽຫາຍຕື່ມອີກ.

ຊັບສິ່ງຂອງຂອງລັດ ຫລື ລວມຫມູ່ບໍ່ອາດຈະທໍາການຮິບໄດ້ເວັ້ນເສັຽແຕ່ໃນກໍລະນີທີ່ໄດ້ກໍານົດໄວ້ໃນມາດຕາ 8 ແລະ ມາດຕາ 13 ຂອງກົດຫມາຍສະບັບນີ້.

## ມາດຕາ 45. ການສິ້ນສຸດກໍາມະສິດ.

ກໍາມະສິດກ່ຽວກັບຊັບສິ່ງຂອງອັນໃດອັນຫນຶ່ງຈະສິ້ນສຸດລົງຖ້າວ່າ:

- ເຈົ້າກໍາມະສິດຫາກໄດ້ຊື້ຂາດກ່ຽວກັບຊັບສິ່ງຂອງນັ້ນຢ່າງສົມບູນແລ້ວ;
- ຊັບສິ່ງຂອງນັ້ນຫາກໄດ້ສູນຫາຍຍ້ອນເຫດບັງເອີນ ຫລື ເຫດສຸດວິໄສ ເຊັ່ນ: ຟ້າຜ່າ, ນໍ້າຖ້ວມ, ແຜ່ນດິນໄຫວ ແລະ ອື່ນໆ;
- ເຈົ້າກໍາມະສິດຫາກບໍ່ໄດ້ທວງຫາເອົາຊັບສິ່ງຂອງຂອງຕົນຄືນ ຕາມກໍານົດເວລາຂອງອາຍຸຄວາມໃນການຮ້ອງຟ້ອງ;
- ຊັບສິ່ງຂອງນັ້ນຫາກໄດ້ຮິບເປັນຂອງລັດ ຫລື ຍຶດເພື່ອຂາຍເລຫລັງໃຊ້ຫນີ້ສິນຕາມຄໍາຕັດສິນຂອງສານ.

## ໝວດທີ 6 ວ່າດ້ວຍຂອບເຂດຂອງການນຳໃຊ້ກຳມະສິດ

**ມາດຕາ 46. ການນຳໃຊ້ກຳມະສິດ**

ການນຳໃຊ້ກຳມະສິດ ແມ່ນ ການຊົມໃຊ້ພາຫະນະ ຫລື ຊັບສິ່ງຂອງທີ່ເປັນຂອງຕົນ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານການເປັນຢູ່ ຫລື ຜົນປະໂຫຍດອັນແນ່ນອນທີ່ຕົນຕ້ອງການ ແຕ່ບໍ່ໃຫ້ກໍ່ຄວາມເສັຽຫາຍ ຫລື ຂັດກັບສິດ ແລະ ຜົນປະໂຫຍດຂອງລັດ, ສັງຄົມ ຫລື ຂອງບຸກຄົນອື່ນ.

**ມາດຕາ 47. ຂອບເຂດການປຸກສ້າງເຮືອນ ຫລື ການປູກຕົ້ນໄມ້**

ບຸກຄົນຜູ້ທີ່ໄດ້ຮັບສິດປຸກສ້າງເຮືອນ ຫລື ກໍ່ສ້າງອື່ນໆແລ້ວ ນັ້ນບໍ່ມີສິດເຮັດໃຫ້ສາຍຄາເຮືອນຂອງຕົນລົ້ນກາຍໄປຈົນເຮັດໃຫ້ນ້ຳຝົນຕົກລົງໃສ່ ຫລື ກວມເອົາທີ່ດິນ ຫລື ເຮືອນຂອງບຸກຄົນອື່ນທີ່ຢູ່ໃກ້ຄຽງນັ້ນ.

ບຸກຄົນຜູ້ທີ່ໄດ້ປຸກເຮືອນ, ປູກຕົ້ນໄມ້, ຕົ້ນໄມ້ກິນໝາກ ຫລື ຕົ້ນໄມ້ເປັນເຄືອ ຫລື ອື່ນໆ ໃນທີ່ດິນຊຶ່ງຕົນມີສິດນຳໃຊ້ນັ້ນບໍ່ໃຫ້ກໍ່ຜົນເສັຽຫາຍ ໃຫ້ແກ່ເຈົ້າຂອງເຮືອນທີ່ຢູ່ໃກ້ຄຽງ ຫລື ກີດຂວາງການສັນຈອນໄປມາ.

**ມາດຕາ 48. ສິດຂອງຜູ້ຖືກເສັຽຫາຍຍ້ອນການນຳໃຊ້ກຳມະສິດໂດຍບໍ່ຖືກຕ້ອງ**

ຜູ້ຖືກເສັຽຫາຍເນື່ອງຈາກສາເຫດທີ່ໄດ້ກ່າວໄວ້ໃນວັກທີ 2 ຂອງມາດຕາ 47 ນີ້ອາດຈະຮານງ່າໄມ້ ຫລື ເຄືອໄມ້ ຫລື ຕັດຮາກໄມ້ທີ່ລ່ວງກາຍເຂົ້າມາໃນທີ່ດິນຕົນກໍໄດ້ ພາຍຫລັງທີ່ໄດ້ແຈ້ງໃຫ້ເຈົ້າກຳມະສິດນັ້ນຊາບ ເຈັດວັນແລ້ວ ແຕ່ຜູ້ກ່ຽວກໍຍັງເມີນເສີຍຢູ່ ຫລື ຜູ້ຖືກເສັຽຫາຍຈະດຳເນີນການປົກປ້ອງສິດ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 63 ແລະ ມາດຕາ 64 ຂອງກົດໝາຍສະບັບນີ້ໄດ້.

ນອກຈາກນີ້ແລ້ວຜູ້ຖືກເສັຽຫາຍຍັງມີສິດຮ້ອງຂໍເອົາການໃຊ້ແທນຄ່າເສັຽຫາຍນັ້ນອີກດ້ວຍ.

**ມາດຕາ 49. ການອະນຸຍາດໃຫ້ມີທາງຜ່ານ**

ບຸກຄົນຜູ້ໃດທີ່ມີເຮືອນ ຊຶ່ງຖືກປິດລ້ອມດ້ວຍເຮືອນ ຫລື ທີ່ດິນຊຶ່ງຜູ້ອື່ນມີສິດນຳໃຊ້ ໂດຍບໍ່ມີທາງຜ່ານອອກໄປສູ່ຫົນທາງໄດ້ ບຸກຄົນຜູ້ນັ້ນກໍມີສິດຮ້ອງຂໍທາງຜ່ານຈາກຜູ້ທີ່ມີສິດນຳໃຊ້ທີ່ດິນທີ່ຢູ່ໃກ້ຫົນທາງກວ່າໝູ່. ຜູ້ທີ່ມີສິດນຳໃຊ້ທີ່ດິນ ຊຶ່ງຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານ ແຕ່ມີສິດຮ້ອງຂໍເອົາການໃຊ້ແທນຄ່າເສັຽຫາຍແກ່ຜົນລະປູກ ຫລື ສິ່ງທີ່ກໍ່ສ້າງຈາກການນຳໃຊ້ທີ່ດິນເປັນທາງຜ່ານນັ້ນຕາມຄວາມເໝາະສົມ.

ໃນກໍລະນີທີ່ມີການເນັ່ງສາຍໄຟຟ້າ, ສາຍໂທລະສັບ ຫລື ຂຸດຮ່ອງນ້ຳ, ວາງທໍ່ນ້ຳ, ທໍ່ນ້ຳປະປາຜ່ານທີ່ດິນຂອງຜູ້ທີ່ມີສິດນຳໃຊ້ບຸກຄົນໃດບຸກຄົນໜຶ່ງ ຊຶ່ງພາໃຫ້ຕົ້ນໄມ້ ຫລື ຜົນລະປູກຕ່າງໆຂອງຜູ້ກ່ຽວໄດ້ຖືກທຳລາຍ ຫລື ພາໃຫ້ມີຄວາມເສັຽຫາຍອື່ນໆແລ້ວ ບຸກຄົນຜູ້ນັ້ນກໍອາດຈະຂໍເອົາຄ່າເສັຽຫາຍທີ່ເນື່ອງມາຈາກການກະທຳນັ້ນກໍໄດ້. ຖ້າວ່າຜູ້ທີ່ມີສິດນຳໃຊ້ທີ່ດິນຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍຈະບໍ່ໃຫ້ຄິດໄລ່ຄ່າເສັຽຫາຍນັ້ນອີກ.

**ມາດຕາ 50. ການອະນຸຍາດໃຫ້ນ້ຳຮ່ອງໄຫລຜ່ານ.**

ບຸກຄົນຜູ້ໃດທີ່ມີຄວາມຈຳເປັນ ໃນການເປັ່ງນ້ຳອອກຈາກດິນບ້ານທີ່ຕົນຢູ່ ກໍມີສິດຮ້ອງຂໍຂຸດຮ່ອງເປັ່ງນ້ຳຜ່ານດິນບ້ານຂອງຜູ້ທີ່ຢູ່ລຸ່ມຖັດຕົນ ຫລື ຜູ້ທີ່ຢູ່ໃກ້ຄອງນ້ຳ. ຜູ້ທີ່ຖືກຮ້ອງຂໍກໍຕ້ອງອະນຸຍາດໃຫ້ຂຸດຮ່ອງເປັ່ງນ້ຳ ແຕ່ມີສິດຮ້ອງຂໍເອົາຄ່າເສັຽຫາຍແກ່ພືນລະປູກ ຫລື ສິ່ງທີ່ປຸກສ້າງຈາກການຂຸດຮ່ອງເປັ່ງນ້ຳນັ້ນ. ຜູ້ຮ້ອງຂໍຂຸດຮ່ອງເປັ່ງນ້ຳຕ້ອງຮັກສາອະນາໄມ ແລະ ສະພາບຂອງ ຮ່ອງນ້ຳໃຫ້ເໝາະສົມ.

**ມາດຕາ 51. ສິດຂອງຜູ້ຮັກສາເຄື່ອງປູກຂອງຝັງ**

ຜູ້ຮັກສາດິນບ້ານ ຫລື ດິນສວນມີສິດນຳໃຊ້ພືນລະປູກຕາມການຕົກລົງ ກັນກັບເຈົ້າຂອງບ້ານ ຫລື ເຈົ້າຂອງສວນ.

**ມາດຕາ 52. ພັນທະຂອງຜູ້ຮັກສາດິນບ້ານ ຫລື ດິນສວນ**

ຜູ້ຮັກສາດິນບ້ານ ຫລື ດິນສວນມີພັນທະປົກປັກຮັກສາ ຫລື ບົວລະບັດເຄື່ອງປູກຂອງຝັງທີ່ມີໃນດິນດັ່ງກ່າວຢ່າງເໝາະສົມ.

ຖ້າວ່າເຄື່ອງປູກຂອງຝັງຫາກຫ່ຽວແຫ້ງ ຫລື ຕາຍໄປຜູ້ຮັກສາຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍໃຫ້ເຈົ້າຂອງບ້ານ ຫລື ເຈົ້າຂອງສວນ ເວັ້ນເສັຽແຕ່ການເສັຽຫາຍນັ້ນຫາກບໍ່ໄດ້ເກີດຂຶ້ນຍ້ອນຄວາມຜິດຂອງຜູ້ກ່ຽວ.

ຖ້າວ່າຜູ້ຮັກສານັ້ນຫາກໄດ້ນຳໃຊ້ພືນລະປູກເກີນຂອບເຂດທີ່ໄດ້ຕົກລົງກັນແລ້ວ ຜູ້ກ່ຽວກໍຈະໄດ້ໃຊ້ແທນຄືນໃຫ້ເຈົ້າຂອງບ້ານ ຫລື ເຈົ້າຂອງສວນ. ໃນກໍລະນີນີ້ເຈົ້າຂອງບ້ານ ຫລື ເຈົ້າຂອງສວນນັ້ນອາດຈະບໍ່ອະນຸຍາດໃຫ້ຜູ້ກ່ຽວນຳໃຊ້ພືນລະປູກຕໍ່ໄປອີກກໍໄດ້.

**ມາດຕາ 53. ສິດຂອງເຈົ້າຂອງບ້ານ ຫລື ເຈົ້າຂອງສວນ**

ເຈົ້າຂອງບ້ານ ຫລື ເຈົ້າຂອງສວນ ຈະລ້ອມຮົ້ວບ້ານ ຫລື ສວນຂອງຕົນກໍໄດ້ ແຕ່ການລ້ອມຮົ້ວນັ້ນບໍ່ໃຫ້ເປັນອຸບປະສັກຕໍ່ການສັນຈອນ ບົນຖະໜົນຫົນທາງ ຫລື ກີດຂວາງທາງທີ່ເຄີຍຫຍ່ຽວໄປມາຜ່ານດິນຕອນດັ່ງກ່າວກ່ອນແລ້ວ ຫລື ລ່ວງເຂດແດນດິນທີ່ຢູ່ໃກ້ຄຽງນັ້ນ.

**ມາດຕາ54. ຄວາມຮັບຜິດຊອບຂອງເຈົ້າຂອງບ້ານ ຫລື ເຈົ້າຂອງສວນ**

ໃນເມື່ອຜູ້ຮັກສາຫາກຮູ້ວ່າເຄື່ອງປູກຂອງຝັງ ໃນທີ່ດິນທີ່ຕົນຮັກສານັ້ນ ຈະຕົກຢູ່ໃນໄພອັນຕະລາຍເຊັ່ນ ຍ້ອນລ້ອມຮົ້ວບໍ່ດີ ຫລື ສັດຕູພືດທຳລາຍ ແລະ ອື່ນໆ ແລະ ໄດ້ສະເໜີໃຫ້ເຈົ້າຂອງບ້ານ ຫລື ເຈົ້າຂອງສວນຊາບແລ້ວ ແຕ່ຜູ້ກ່ຽວກໍຍັງເມີນເສີຍຢູ່ ໃນກໍລະນີນີ້ ການເສັຽຫາຍທຸກຢ່າງທີ່ເກີດຂຶ້ນກໍແມ່ນໃຫ້ເຈົ້າຂອງບ້ານ ຫລື ເຈົ້າຂອງສວນເປັນຜູ້ຮັບຜິດຊອບເອົາເອງ. ຖ້າວ່າຜູ້ຮັກສາຫາກໄດ້ນຳໃຊ້ຊັບຂອງຕົນໃນການສະກັດກັ້ນການເສັຽຫາຍນັ້ນ ເຈົ້າຂອງບ້ານ ຫລື ເຈົ້າຂອງສວນກໍຕ້ອງໄດ້ໃຊ້ແທນຄ່າໃຊ້ຈ່າຍໃຫ້ຜູ້ຮັກສາ.

**ມາດຕາ 55. ການຮັບຮູ້ສິດນຳໃຊ້ທີ່ດິນເປົ່າຫວ່າງ ແລະ ທີ່ດິນປ່າໄມ້ທີ່ຊຸດໂຊມ**

ລັດຮັບຮູ້ສິດນຳໃຊ້ຂອງບຸກຄົນ ຫລື ສະຫະກອນ ຫລື ອົງການຈັດຕັ້ງລວມຫມູ່ອື່ນໆ ທີ່ໄດ້ມີຄວາມສະໝັກໃຈ ຢາກນຳໃຊ້ທີ່ດິນເປົ່າຫວ່າງ ຫລື ທີ່ດິນປ່າໄມ້ທີ່ຊຸດໂຊມ ເພື່ອຟື້ນຟູບູລະນະ ແລະ ປູກຂະຫຍາຍປ່າໄມ້ໃຫ້ເປັນດົງ ຫລື ທຳການປູກຝັງ, ລ້ຽງສັດດ້ວຍທຶນຂອງຕົນເອງ.

## ຫມວດທີ 7 ວ່າດ້ວຍການປົກປ້ອງກຳມະສິດ

**ມາດຕາ 56. ການປົກປ້ອງກຳມະສິດ**

ການປົກປ້ອງກຳມະສິດ ແມ່ນການນຳໃຊ້ມາດຕະການທີ່ໄດ້ບົ່ງໄວ້ໃນກົດຫມາຍຕໍ່ບຸກຄົນທີ່ໄດ້ລະເມີດສິດກ່ຽວກັບກຳມະສິດຂອງບຸກຄົນອື່ນເພື່ອຟື້ນຟູສິດ ແລະ ຜົນປະໂຫຍດທີ່ໄດ້ຖືກລະເມີດນັ້ນຄືນໃຫ້ເຈົ້າກຳມະສິດ.

**ມາດຕາ 57. ການຮ້ອງຟ້ອງເພື່ອທວງເອົາຊັບສິ່ງຂອງຄືນ**

ໃນເມື່ອສິດກ່ຽວກັບຊັບສິ່ງຂອງ ຂອງເຈົ້າກຳມະສິດຫາກໄດ້ຖືກລະເມີດໂດຍບຸກຄົນອື່ນທີ່ພວມຄອບຄອງຢ່າງຜິດກົດຫມາຍຢູ່ນັ້ນ ຜູ້ກ່ຽວກໍມີສິດຮ້ອງຟ້ອງ ເພື່ອທວງເອົາຊັບສິ່ງຂອງຈາກບຸກຄົນນັ້ນຄືນໄດ້.

ຜູ້ຄອບຄອງຢ່າງຜິດກົດຫມາຍ ແມ່ນ ຜູ້ທີ່ໄດ້ລະເມີດຂໍ້ກຳນົດຂອງກົດຫມາຍເພື່ອຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນ ຫລື ແມ່ນຜູ້ທີ່ໄດ້ຮັບຊັບສິ່ງຂອງຈາກຜູ້ທີ່ບໍ່ມີສິດມອບຊັບສິ່ງຂອງນັ້ນໃຫ້ແກ່ຕົນ.

**ມາດຕາ 58. ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດຫມາຍ ໂດຍຄວາມບໍລິສຸດໃຈ**

ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດຫມາຍໂດຍຄວາມບໍລິສຸດໃຈ ແມ່ນ ບຸກຄົນທີ່ບໍ່ຮູ້ ແລະ ບໍ່ອາດຈະຮູ້ໄດ້ວ່າຊັບສິ່ງຂອງທີ່ຕົນຄອບຄອງນັ້ນຍັງເປັນກຳມະສິດຂອງບຸກຄົນອື່ນຢູ່.

ໃນກໍລະນີນີ້ ຖ້າວ່າເຈົ້າກຳມະສິດເດີມຫາກໄດ້ທວງເອົາຊັບສິ່ງຂອງນັ້ນຄືນ ຜູ້ຄອບຄອງຕ້ອງໄດ້ສົ່ງຄືນໃຫ້ຜູ້ກ່ຽວ ແຕ່ເຈົ້າກຳມະສິດເດີມຕ້ອງທົດແທນຕາມມູນຄ່າຂອງຊັບສິ່ງຂອງໃຫ້ແກ່ຜູ້ຄອບຄອງ. ເຈົ້າກຳມະສິດເດີມກໍມີສິດຮ້ອງຂໍເອົາການໃຊ້ແທນຄ່າເສັຽຫາຍ ຈາກຜູ້ທີ່ໄດ້ມອບຊັບສິ່ງຂອງໂດຍບໍ່ມີສິດນັ້ນ.

ໃນກໍລະນີທີ່ຜູ້ຄອບຄອງຫາກໄດ້ຮັບຊັບສິ່ງຂອງດ້ວຍການມອບ ຫລື ການສືບທອດມູນມໍຣະດົກນັ້ນ ຈະບໍ່ມີການທົດແທນມູນຄ່າຂອງຊັບດັ່ງກ່າວ ຫລື ໃຊ້ແທນຄ່າເສັຽຫາຍແຕ່ຢ່າງໃດ.

**ມາດຕາ 59. ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດຫມາຍໂດຍບໍ່ມີຄວາມບໍລິສຸດໃຈ**

ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດຫມາຍໂດຍບໍ່ມີຄວາມບໍລິສຸດໃຈ ແມ່ນ ບຸກຄົນທີ່ຮູ້ ຫລື ອາດຈະຮູ້ໄດ້ວ່າຊັບສິ່ງຂອງທີ່ຕົນຄອບຄອງນັ້ນຍັງເປັນກຳມະສິດຂອງບຸກຄົນອື່ນຢູ່. ໃນກໍລະນີນີ້ຊັບສິ່ງຂອງທັງຫມົດນັ້ນຕ້ອງໄດ້ຍຶດຈາກຜູ້ຄອບຄອງແລ້ວ ສົ່ງໃຫ້ເຈົ້າກຳມະສິດຄືນ. ຜູ້ຄອບຄອງຈະຕໍ່ວ່າ

ເອົາການໃຊ້ແທນຄ່າເສັຽຫາຍຈາກຜູ້ທີ່ໄດ້ມອບຊັບສິ່ງຂອງໃຫ້ຕົນ ໂດຍບໍ່ຖືກຕ້ອງນັ້ນກໍໄດ້ ແຕ່ບໍ່ມີສິດຮ້ອງຟ້ອງຕໍ່ສານ.

### ມາດຕາ 60. ໝາກຜົນ ແລະ ລາຍໄດ້ຈາກຊັບສິ່ງຂອງທີ່ຄອບຄອງຢ່າງຜິດກົດໝາຍ

ໝາກຜົນ ຫລື ລາຍໄດ້ທີ່ເກີດຈາກຊັບສິ່ງຂອງ ຊຶ່ງຢູ່ໃນການຄອບຄອງຂອງບຸກຄົນໃດບຸກຄົນໜຶ່ງຢ່າງຜິດກົດໝາຍ ໂດຍບໍ່ມີຄວາມບໍລິສຸດໃຈຈະໄດ້ສົ່ງຄືນໃຫ້ເຈົ້າກຳມະສິດທັງໝົດ. ໃນກໍລະນີທີ່ຜູ້ກ່ຽວຫາກໄດ້ເອົາໝາກຜົນ ຫລື ລາຍໄດ້ນັ້ນໄປນຳໃຊ້, ຂາຍ ແລະ ອື່ນໆ ຜູ້ກ່ຽວກໍຈະໄດ້ໃຊ້ແທນຄ່າເສັຽຫາຍ ຫລື ມູນຄ່າຂອງໝາກຜົນ ຫລື ລາຍໄດ້ນັ້ນໃຫ້ເຈົ້າກຳມະສິດ.

ສ່ວນຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍ ໂດຍຄວາມບໍລິສຸດໃຈ ຈະບໍ່ໄດ້ສົ່ງໝາກຜົນ ຫລື ລາຍໄດ້ທີ່ເກີດຈາກຊັບສິ່ງຂອງນັ້ນ ໃຫ້ເຈົ້າກຳມະສິດແຕ່ຢ່າງໃດ ຕາມທີ່ໄດ້ກ່າວໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້.

### ມາດຕາ 61. ການທີ່ເຮັດໃຫ້ສະພາບຂອງຊັບສິ່ງຂອງ ທີ່ຄອບຄອງຢ່າງຜິດກົດໝາຍດີຂຶ້ນ.

ບຸກຄົນຜູ້ໃດຫາກໄດ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍໂດຍຄວາມບໍລິສຸດໃຈ ບຸກຄົນຜູ້ນັ້ນ ມີສິດຮັບເອົາສິ່ງທີ່ຕົນໄດ້ເຮັດໃຫ້ດີຂຶ້ນນັ້ນໄວ້ ຖ້າວ່າການຕັດແຍກສິ່ງທີ່ເຮັດຂຶ້ນໃໝ່ນັ້ນຈະບໍ່ເຮັດໃຫ້ຊັບສິ່ງຂອງເດີມເສັຽຫາຍ ຫລື ເປ່ເພໃນເວລາຕັດແຍກອອກຈາກກັນ. ຖ້າວ່າຊັບສິ່ງຂອງທີ່ເຮັດຂຶ້ນໃໝ່ນັ້ນຫາກບໍ່ສາມາດຕັດແຍກອອກຈາກຊັບສິ່ງຂອງເດີມໄດ້ແລ້ວ ຜູ້ຄອບຄອງຢ່າງຜິດກົດໝາຍໂດຍຄວາມບໍລິສຸດໃຈນັ້ນ ກໍມີສິດທວງເອົາການໃຊ້ແທນຄ່າເສັຽຫາຍ ສະເພາະແຕ່ສ່ວນທີ່ຕົນໄດ້ເຮັດດີຂຶ້ນນັ້ນຈາກເຈົ້າກຳມະສິດ ແຕ່ບໍ່ໃຫ້ເກີນມູນຄ່າຂອງຊັບສິ່ງຂອງເດີມ.

ສ່ວນສິ່ງທີ່ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍ ໂດຍບໍ່ມີຄວາມບໍລິສຸດໃຈ ໄດ້ເຮັດໃຫ້ດີຂຶ້ນນັ້ນກໍຈະຕົກເປັນຂອງເຈົ້າກຳມະສິດເດີມ ໂດຍບໍ່ມີການທົດແທນແຕ່ຢ່າງໃດ ຕາມທີ່ໄດ້ກ່າວໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

### ມາດຕາ 62. ການຮ້ອງຟ້ອງເພື່ອໃຫ້ຮັບຮູ້ສິດກ່ຽວກັບກຳມະສິດ.

ໃນເມື່ອຫາກມີບຸກຄົນໃດບຸກຄົນໜຶ່ງໄດ້ໂຕ້ແຍ້ງເອົາສິດກ່ຽວກັບຊັບສິ່ງຂອງຂອງຕົນແລ້ວ ເຖິງວ່າສິດຄອບຄອງຊັບສິ່ງຂອງນັ້ນ ຍັງບໍ່ທັນໄດ້ຖືກລະເມີດກໍຕາມ ເຈົ້າກຳມະສິດກໍມີສິດຮ້ອງຟ້ອງຕໍ່ສານ ເພື່ອໃຫ້ຮັບຮູ້ສິດກ່ຽວກັບຊັບສິ່ງຂອງ ຂອງຕົນນັ້ນ.

### ມາດຕາ 63. ການຮ້ອງຟ້ອງເພື່ອທວງໃຫ້ຢຸດເຊົາການກີດຂວາງ ຫລື ອຸບປະສັກ

ໃນເມື່ອຫາກມີບຸກຄົນໃດບຸກຄົນໜຶ່ງ ໄດ້ກໍ່ການກີດຂວາງ ຫລື ສ້າງ ອຸບປະສັກຕໍ່ການນຳໃຊ້, ໄດ້ຮັບໝາກຜົນ ຫລື ຊີ້ຂາດກ່ຽວກັບຊັບສິ່ງຂອງ ຂອງຕົນ ເຖິງວ່າສິດຄອບຄອງຊັບສິ່ງຂອງນັ້ນຍັງບໍ່ທັນໄດ້ຖືກລະເມີດກໍຕາມ ເຈົ້າກຳມະສິດ ກໍມີສິດຮ້ອງຟ້ອງ ເພື່ອທວງໃຫ້ບຸກຄົນນັ້ນຢຸດເຊົາການກີດຂວາງ ຫລື ລົບລ້າງອຸບປະສັກນັ້ນກໍໄດ້.

**ມາດຕາ 64. ການຮ້ອງຟ້ອງເພື່ອຂໍເອົາການໃຊ້ແທນຄ່າເສັຽຫາຍ**

ໃນເມື່ອບຸກຄົນໃດບຸກຄົນໜຶ່ງຫາກໄດ້ເຮັດໃຫ້ຊັບສິ່ງຂອງ ຂອງບຸກຄົນອື່ນເປ່ເພ ຫລື ເສັຽຫາຍແລ້ວ ເຈົ້າຂອງຊັບມີສິດຮ້ອງຟ້ອງຕໍ່ສານ ເພື່ອຂໍເອົາການໃຊ້ແທນຄ່າເສັຽຫາຍຈາກຜູ້ກໍ່ຄວາມເສັຽຫາຍນັ້ນ.

**ມາດຕາ 65. ການຮ້ອງຟ້ອງເພື່ອຂໍເອົາການໃຊ້ແທນຄ່າເສັຽຫາຍ ເນື່ອງຈາກການນໍາໃຊ້ນໍ້າຫ້ວຍ, ນໍ້າໜອງຄອງບຶງ ຫລື ເໝືອງຝາຍ.**

ຜູ້ທີ່ມີສິດນໍາໃຊ້ທີ່ດິນ ຊຶ່ງເຄື່ອງປູກຂອງຝັງ ຫລື ເຂົ້ານາຕາກ້າຂອງຕົນໄດ້ຮັບຄວາມເສັຽຫາຍເນື່ອງຈາກບຸກຄົນອື່ນໄດ້ເປັ່ງນໍ້າຫ້ວຍ, ນໍ້າໜອງຄອງບຶງ ຫລື ເໝືອງຝາຍມາຖ້ວມ ຫລື ໄດ້ຖົມ ຫລື ຕັນນໍ້າດັ່ງກ່າວບໍ່ໃຫ້ໄຫລລົງມາ ແລ້ວເຮັດໃຫ້ຜົນລະປູກຕ່າງໆຖືກເສັຽຫາຍ ຫລື ບໍ່ໄດ້ນໍາໃຊ້ນໍ້ານັ້ນເປັນປົກກະຕິ ກໍມີສິດຮ້ອງຟ້ອງໃຫ້ຢຸດເຊົາການກະທໍານັ້ນ ພ້ອມທັງຮ້ອງຂໍເອົາການໃຊ້ແທນຄ່າເສັຽຫາຍຈາກຜູ້ທີ່ເປັ່ງ ຫລື ຖົມ ຫລື ຕັນນໍ້າ.

**ມາດຕາ 66. ການຮ້ອງຟ້ອງເອົາຊັບສິ່ງຂອງທີ່ໄດ້ມອບໃຫ້ບຸກຄົນອື່ນຄອບຄອງ**

ໃນເມື່ອເຈົ້າກໍາມະສິດໄດ້ມອບຊັບສິ່ງຂອງໃຫ້ບຸກຄົນໃດບຸກຄົນໜຶ່ງຮັກສາ, ເຊົ່າ ຫລື ນໍາໃຊ້ ແລະ ອື່ນໆແລ້ວ ຫາກບຸກຄົນເຫລົ່ານີ້ບໍ່ຍອມສົ່ງຊັບສິ່ງຂອງດັ່ງກ່າວຄືນໃຫ້ເຈົ້າກໍາມະສິດ ຜູ້ກ່ຽວມີສິດຮ້ອງຟ້ອງ ເອົາຊັບສິ່ງຂອງນັ້ນຄືນ. ໃນກໍລະນີທີ່ຊັບສິ່ງຂອງຫາກຖືກເສັຽຫາຍ ຫລື ເປ່ເພຍ້ອນຄວາມຜິດຂອງຜູ້ຄອບຄອງແລ້ວ ຜູ້ກ່ຽວຍັງຈະຕ້ອງໄດ້ໃຊ້ແທນຄ່າເສັຽຫາຍອີກດ້ວຍ ເວັ້ນເສັຽແຕ່ສັນຍາຫາກໄດ້ກໍານົດໄວ້ຢ່າງອື່ນ.

**ມາດຕາ 67. ການທີ່ໄດ້ຊັບສິ່ງຂອງມາໂດຍບໍ່ມີພື້ນຖານຖືກຕ້ອງ**

ບຸກຄົນຜູ້ໃດທີ່ໄດ້ຊັບສິ່ງຂອງຂອງບຸກຄົນອື່ນມາໂດຍບໍ່ມີເຫດຜົນແລ້ວ ບຸກຄົນຜູ້ນັ້ນຈະຕ້ອງສົ່ງຊັບສິ່ງຂອງທີ່ໄດ້ມານັ້ນຄືນໃຫ້ເຈົ້າກໍາມະສິດເດີມ.

**ມາດຕາ 68. ການປົກປ້ອງສິດຂອງຜູ້ຄອບຄອງຊັບສິ່ງຂອງ ຊຶ່ງຕົນບໍ່ແມ່ນເຈົ້າກໍາມະສິດ**

ຜູ້ຄອບຄອງຊັບສິ່ງຂອງ ຊຶ່ງຕົນບໍ່ແມ່ນເຈົ້າກໍາມະສິດ ເຊັ່ນ ຜູ້ເຊົ່າ, ຜູ້ຮັກສາ, ຜູ້ຢືມ ກໍມີສິດຮ້ອງຟ້ອງເຊັ່ນດຽວກັນກັບ ເຈົ້າກໍາມະສິດ ເພື່ອທວງເອົາຊັບສິ່ງຂອງຄືນ ແລະ ເພື່ອທວງໃຫ້ຢຸດເຊົາການກີດຂວາງ ຫລື ລົບລ້າງອຸປະສັກຕາມທີ່ໄດ້ບົ່ງໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

ກົດໝາຍສະບັບນີ້ ໄດ້ລົງຄະແນນສຽງຮັບຮອງເອົາຢ່າງເປັນເອກະສັນ ໃນກອງປະຊຸມສະໄໝວິສາມັນຄົບຄະນະ ເທື່ອທີສີ່ຂອງສະພາປະຊາຊົນສູງສຸດ (ຊຸດທີ II) ໃນວັນທີ 27ມິຖຸນາ1990 ເວລາ 14 ໂມງ 30 ນາທີ.

ປະທານສະພາປະຊາຊົນສູງສຸດ

ໜູຮັກ ພູມສະຫວັນ